ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ
ກົມພັດທະນາການທ່ອງທ່ຽວ ແຂວງອຸດົມໄຊ, ວັນທີ 1/02/2013

ບົດລາຍງານ
ການສຳຫລວດກຳນົດເຂດແຫຼ່ງທ່ອງທ່ຽວຖ້ຳຈອມອອງ ເມືອງໄຊ ແຂວງ ອຸດົມໄຊ

I. ພາກສະເໜີ

- ອີງຕາມແຜນຍຸດທະສາດພັດທະນາການທ່ອງທ່ຽວ 2006–2020 ຂອງອົງການທ່ອງທ່ຽວແຫ່ງຊາດ.
- ອີງຕາມຄວາມຕ້ອງການຂອງການພັດທະນາການທ່ອງທ່ຽວພາຍໃນແຂວງອຸດົມໄຊ.

ການຈັດສັນແຫຼ່ງທອງທ່ຽວ ຖືວ່າເປັນວຽກງານບູລິມາສິດໜຶ່ງທີ່ສຳຄັນຂອງຂະແໜງການທ່ອງທ່ ຽວ ທັງນີ້ກໍເພື່ອເປັນການກຳນົດຂອບເຂດ ແລະ ຈັດສັນເນື້ອທີ່ແຫຼ່ງທ່ອງທ່ຽວໃນໃຫ້ເປັນລະບົບ ທັງນີ້ກໍເພື່ອເປັນພື້ນຖານໃຫ້ການ ພັດທະນາ, ການອະນຸລັກຮັກສາຊັບພະຍາກອນການທ່ອງທ່ຽວໃຫ້ມີຄວາມຍືນຍົງ.

ໂຄງການຈັດສັນແຫຼ່ງທ່ອງທ່ຽວ ໄດ້ເລີ່ມຈັດຕັ້ງປະຕິບັດມາແຕ່ປີ 2008 ໂດຍແມ່ນອົງການທ່ອງທ່ຽວແຫ່ງຊາດ, ຊຶ່ງແມ່ນກົມແຜນການ ແລະ ການຮ່ວມມືໃນຕົ້ນອ່ານ ເປັນຜູ້ນຳພາການຈັດຕັ້ງປະຕິບັດ ແລະ ຮັບຜິດຊອບໂດຍກົງ ໂດຍການປະສານງານກັບບັນດາແຂວງໃນທົ່ວປະເທດ. ໃນເບື້ອງຕົ້ນ, ທີມງານຂັ້ນສູນກາງໄດ້ນຳພາບັນດາແຂວງຈັດຕັ້ງ ປະຕິບັດໂຄງການສຳຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວ ຢູ່ແຂວງລະ 1 ແຫ່ງ ເພື່ອເປັນຕົວແບບ, ຫຼັງຈາກນັ້ນແມ່ນໃຫ້ແຕ່ ລະແຂວງສືບຕໍ່ຈັດຕັ້ງປະຕິບັດ ສ່ວນທີມງານຂັ້ນສູນກາງແມ່ນຈະສືບຕໍ່ຊ່ວຍທາງດ້ານວິຊາການຈົນກ່ວາຈະສຳເລັດ.

ຍ້ອນເຫັນໄດ້ຄວາມສຳຄັນຂອງການພັດທະນາການທ່ອງທ່ຽວ ແລະ ທ່າແຮງຂອງແຫຼ່ງທ່ອງທ່ຽວພາຍໃນ ເທດສະບານເມືອງໄຊ ກໍຄືແຂວງອຸດົມໄຊ ອຳນາດການ ປົກຄອງແຂວງອຸດົມໄຊ ໄດ້ມີທິດທາງໃນການພັດທະນາແຫຼ່ງທ່ອງ ທ່ຽວທຳມະຊາດຖ້ຳຈອມອອງ ໃຫ້ເປັນແຫຼ່ງທ່ອງທ່ຽວທີ່ສຳຄັນແຫ່ງໜຶ່ງຂອງແຂວງ . ດ້ວຍນັ້ນ, ພະແນກ ຖວທ ແຂວງ ອຸດົມໄຊ ຈຶ່ງໄດ້ນຳສະເໜີເຖິງກົມພັດທະນາການທ່ອງທ່ຽວ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ລົງສຳ ຫຼວດຄັດສັນແຫຼ່ງທ່ອງທ່ຽວຖ້ຳຈອມອອງ ເມືອງໄຊ.

ກ່ອນການລົງສຳຫຼວດແຫຼ່ງທ່ອງທ່ຽວຖ້ຳຈອມອອງ ໄດ້ຈັດກອງປະຊຸມເພື່ອເຜີຍແຜ່ເອກະສານການຈັດສັນແຫຼ່ງ ທ່ອງທ່ຽວໃຫ້ພາກສ່ວນຕ່າງໆໃນ້ຂນແຂວງ ແລະ ເມືອງໄດ້ຮັບຮູ້ ແລະ ເຂົ້າໃຈ ຊ່ງສະເໜີໂດຍທີມງານຈາກກົມພັດທະນາ ການທ່ອງທ່ຽວ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. ທີມງານຈາກສູນກາງໄດ້ສະເໜີເອກະສານ ກ່ຽວກັບການກຳຮູບແບບ, ວິທີການ, ແລະ ຂັ້ນຕອນຂອງການຈັດສັນແຫຼ່ງທ່ອງທ່ຽວ ໃຫ້ກອງປະຊຸມໄດ້ຮັບຊາບ. ສຳລັບຜູ້

ເຂົ້າຮ່ວມກອງປະຊຸມແມ່ນມາຈາກພາກສ່ວນກ່ຽວຂ້ອງຂອງແຂວງອຸດົມໄຊ ແລະ ເມືອ ໄຊ ເຊັ່ນ: .....

ສໍາລັບຈຸດປະສົງຕົ້ນຕໍຂອງການລົງສໍາຫຼວດ, ເກັບກໍາຂໍ້ມູນ ແລະ ກໍານົດເຂດແຫຼ່ງທ່ອງທ່ຽວວັດຖາຈອມອອງເມືອງໄຊ , ແຂວງອຸດົມໄຊແມ່ນເພື່ອ:

- ກໍານົດເຂດໃນບໍລິເວນແຫຼ່ງທ່ອງທ່ຽວວັດຖາຈອມອອງ, ຈັດສັນໃຫ້ເປັນລະບົບເຊັ່ນ: ເຂດັກນ້ຊນ, ເຂດອະນຸລັກ, ເຂດສະຫງວນ ແລະ ເຂດບໍລິການ;
- ກໍານົດກິດຈະກໍາທີ່ເຫັນວ່າມີທ່າແຮງໃນບໍລິເວນແຫຼ່ງທ່ອງທ່ຽວວັດຖາຈອມອອງ ແລະ ກິດຈະກໍາການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມ, ້ພ້ອມທັງກໍານົດທິດທາງໃນການພັດທະນາໂຄງລ່າງສິ່ງຮອງຮັບໃຫ້ແກ່ການຂະຫຍາຍຕົວຂອງການທ່ອງທ່ຽວໃນອານາຄົດ;
- ແນະນໍາແນວຄວາມຄິດໃນການພັດທະນາແຫຼ່ງທ່ອງທ່ຽວວັດຖາຈອມອອງ ແນໃສ່ເຮັດໃຫ້ປະຊາຊົນ ທ້ອງຖິ່ນມີສ່ວນຮ່ວມໃນກິດຈະກໍາການບໍລິການການທ່ອງທ່ຽວ ແລະ ຂົນຂວາຍການລົງທຶນ ຈາກທຸກພາກສ່ວນ ເພື່ອກໍ ສ້າງໂຄງລ່າງພື້ນຖານຮັບໃຊ້ການບໍລິການແກ່ນັກທ່ອງທ່ຽວພາຍໃນແຂວງ, ນັກທ່ອງທ່ຽວທີ່ມາຈາກແຂວງອື່ນ ແລະ ນັກທ່ອງທ່ຽວຕ່າງປະເທດ.

ຂໍ້ມູນດ້ານຕ່າງໆໃນບົດລາຍງານສະບັບນີ້ ຈໍານວນຫນຶ່ງແມ່ນໄດ້ມາຈາກການສໍາຫຼວດ, ການເກັບກໍາຂໍ້ມູນ, ການວັດແທກເນື້ອທີ່ຕົວຈິງ, ການພົບປະສໍາພາດກັບອໍານາດການປົກຄອງທີ່ກ່ຽວຂ້ອງຂອງພາກລັດ, ການພົບປະແລກ ປ່ຽນ ຄວາມຄິດເຫັນກັບອໍານາດການປົກຄອງຂັ້ນເມືອງ, ອໍານາດການປົກຄອງບ້ານ ແລະ ປະຊາຊົນໃນເຂດບ້ານທີ່ຕິດພັນກັບ ແຫຼ່ງທ່ອງທ່ຽວວັດຖາຈອມອອງ.

ບົດລາຍງານສະບັບນີ້ປະກອບມີ 4 ພາກໃຫຍ່ຄື:

- ພາກທີ I: ພາກສະເຫນີ
- ພາກທີ II: ສະພາບທີ່ຕັ້ງ ແລະ ຂອບເຂດເນື້ອທີ່ແຫຼ່ງທ່ອງທ່ຽວ
- ພາກທີ III: ການວິເຄາະຈຸດດີ, ຈຸດອ່ອນ, ໂອກາດ ແລະ ສິ່ງທ້າທາຍ (SWOT Analysis)
- ພາກທີ IV: ທິດທາງການພັດທະນາ ແລະ ຄຸ້ມຄອງຖໍ້າຈອມອອງ

ຄະນະຮັບຜິດຊອບການສໍາຫຼວດຈັດສັນແຫຼ່ງທ່ອງທ່ຽວ ໄດ້ມີການແບ່ງປັນໜ້າທີ່ຄວາມຮັບຜິດ ຊອບໃຫ້ທີມງານ ຂອງສູນກາງ ແລະ ທີມງານຂອງແຂວງ , ເນື້ອງໃນການລົງສໍາຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວ ັຖາຈອມອອງ ໂດຍມີ 2 ທີມງານຄື:

ທີມທີຫນຶ່ງ: ແມ່ນທີມງານສໍາຫຼວດເນື້ອທີ່ແຫຼ່ງທ່ອງທ່ຽວ;

ທີມງານທີສອງ: ທີມງານສໍາຫຼວດສະພາບເສດຖະກິດ,ັ ວັດທະນະທໍ -ສັງຄົມ ແລະ ິ ່ງແວດ້ ລອມ.

ພາຍຫຼັງການສໍາຫຼວດ, ທີມງານ ັ ຂນສູນກາງ ແລະ ແຂວງ ໄ ດ ຮ ່ວມ ັ ກ ນ ຮ ່າງເອກະສານບົດລາຍງານການຈັດສັນແຫຼ່ງ ທ່ອງທ່ຽວດັ່ງກ່າວ ແລະ ໄ ດ ັ ຈ ດກອງປະຊຸມ ່ ວ ນ ຮ ່າ ງ ບ ດ ລ ຍ ງ ນ ໂ ດ ຍ ມ ຄ ະ ນ ະ ຮ ັ ບ ຜ ດ ຊ ອ ບ ຈ າ ກ ພ ະ ແ ນ ກ ກ ນ ທ ່ ກ ່ ຽ ວ ຂ ້ ອ ງ ຂ ອ ງ ແຂວງເຂົ້າຮ່ວມ. ັ ທ ງ ນ , ກ ເ ພ ່ ອ ປ ກ ສ າ ຫ ລ ໃ ຫ ມ ຄ ວ າ ມ ເ ປ ນ ເ ອ ກ ກ ະ ພ າ ບ ນ ແ ຕ ່ ບ ອ ງ ັ ຕ ກ ່ ຽ ວ ກ ບ ກ ນ ກ ໍ ນ ດ ຂ ອ ບ ເ ຂ ດ ແ ຫ ຼ ່ ງ ທ່ອງທ່ຽວ, ແ ນ ວ ຄ ວ າ ມ ຄ ດ ໃ ນ ກ ນ ພ ດ ທ ະ ນ າ ແ ຫ ຼ ່ ງ ທ ່ ອ ງ ທ ່ ຽ ວ ฉ ັ ງ ຈ າ ກ ນ ນ , ຂ ນ ສ ນ ກ ງ ໄ ດ ປ ບ ປ ງ ບ ດ ລ ຍ ງ ນ ດ ງ ກ ່ າ ວ ແ ລ ວ ສ ່ ງ ໃ ຫ ້ ຂ ະ ແ ໜ ງ ກ ນ ທ ່ ອ ງ ທ ່ ຽ ວ ແ ຂ ວ ງ ເ ພ ່ ອ ນ ໍ າ ສ ະ ເ ໜ ຕ ່ ອ ອ ໍ ນ າ ດ ກ ນ ປ ກ ຄ ອ ງ ແ ຂ ວ ງ ພ ່ ອ ຂ ໍ ທ ດ ຊ ນ ໍ ແ ລ ະ ຂ ກ ນ ຮ ບ ຮ ອ ງ ເ ອ ົ າ

ໃບຄລາຍງານັ່ງກ່າວ ເພື່ອປັນບ່ອນອີງໃນການັ່ປກ ັ ຫ ັ ກໝາຍຂອບເຂດແຫ ັ ງທ ັ ່ ອງທ ັ ່ ຽວ ແລະ ການພ ັ ດທະນາໃນ ເຂດ ັ ດ ັ ່ ງກ ່ າວໃນ ໍ ຕ ່ ໜ ້ ານ ້ າ

ຮ ບພ ບກ ອງປ ຊ ມ ັ ກ ສ ໜ ັ ກ ສ ຂ ອງ ັ ທ ບ ງ ນ ຈ ກ ສ ນ ກ ແ ະ ທ ບ ງ ນ ຂ ອງ ແ ຂ ວ ງ ກ ອ ນ ກ ນ ັ ລ ງ ສ ຫ ວ ດ

ຮ ບພ ບ ທ ບ ງ ນ ລ ງ ສ ຫ ວ ດ

II ສະພາບທົ່ວໄປຂອງແຫຼ່ງທ່ອງທ່ຽວ ຖ້ຳຈອມອອງ

1. ທີ່ຕັ້ງ ແລະ ຂອບເຂດເນື້ອທີ່

ຖ້ຳຈອມອອງ ນອນຢູ່ໃນພື້ນທີ່ຂອງ ້ບ້ານຈອມອອງ, ເມືອງໄຊ, ແຂວງອຸດົມໄຊ ແລະ ຕັ້ງຢູ່ຫ່າງຈາກ ເທດສະບານເມືອງໄຊ ໄປທາງທິດຕາເວັນຕົກສຽງເໜືອປະມານ 36 ກມ, ມີເນື້ອທີ່ທັງໝົດ 3845.17 ຮຕ. ພື້ນທີ່ສ່ວນ ຫຼາຍເປັນ ້ຄອຍຊັນໄປຕາມສາຍພູ, ພູດອຍກວມເອົາປະມານ 85% ແລະ ມີເຂດແດນຕິດກັ ້ບຫຼາຍ ້ບ້ານຄື: ທິດເໜືອຕິດກັ ້ບ ້ບ້ານ ້ຫ້ວຍຊ ້ອຍ, ທິດ ໃ ້ຕ ້ກັ ້ບ ້ບ້ານ ້ນ ້ຫຼ ້ະ, ທິດຕາເວັນອອກຕິດ ້ບ ້ານ ້ ້ ້ວາ ້ວ ້ະ ຈ ້ ້ ແລະ ້ ້ ້

ເຂົ້າຖ້ຳຈອມອອງ ແລະ ຕິດພັນກັບແຫຼ່ງທ່ອງທ່ຽວຫຼາຍກວ່າຫມູ່ຊຶ່ງຂໍ້ມູນລາຍລະອຽດກ່ຽວກັບບ້ານດັ່ງກ່າວແມ່ນມີດັ່ງລຸ່ມ ນີ້:

ບ້ານຈອມອອງ

ບ້ານຈອມອອງ ແມ່ນບ້ານທີ່ຍ້າຍມາຈາກເມືອງນາໜ້ ຊ່ຶງໄດ້ມາສ້າງຕັ້ງ ບ້ານຂຶ້ນໃນຊຸມປີ 1910 ໃນໄລຍະນັ້ນມີພຽງ 7 ຄອບຄົວ. ປະຊາຊົນຫມົດບ້ານແມ່ນຊົນເຜ່ົາກຶມມຸລີ ຊຶ່ງຍັງຮັກສາວັດທະນະທຳ, ວິຖີຊີວິດແບບດ່ັງເດີມໄວ້ເຊ່ັນ : ການໃຊ້ອຖ້ີ , ແບບແຜນການດຳລົງຊີວິດ , ການທຳມາຫາກິ ນ, ການນຸ່ງຖ , ການັຂບລ້ຳທອງຖ້ຳນ, ການຫ້ືນບຸນປະເພນີປະຈຳປ ີ ແລະ ອ ື່ນໆ.

ບ້ານຈອມອອງມີປະຫວັດໜ ຶ່ງທ ີ່ເອ ີ້ນວ ່າຈອມອອງ ຍ ້ອນວ ່າ: ຄ ຳວ ່າ" ຈອມ " ເປ ັນພ າສ າກ ຶມມ ຸ ເຊ ິ ່ງແປວ ່າ ຕ ິດຕ າມ ໄປ, ນ ຳກ ັ ້ນໄປ, ສ ່ວນຄ ຳວ ່າ" ອອງ "ແປວ ່າ ໂຕຕ ໍ ່ດ ິນ, ໃນສ ະໄໝກ ່ອນປ ະຊ າຊ ົນເມ ືອງນ ານ ້ ໍ ໄດ ້ໄປຄ ້ອງຕ ໍ ຫ ຼ ື ຫ ານ ໍ ານ ໍ ານ ໍ

ໃຕ່ຢ່າງຜະລິດຕະພັນຂອງຊົນເຜ່າ ມົ້ງ ມີທ່າແຮງສາມາດນໍາມາແປຮູບເປັນຜະລິດຕະພັນເພື່ອຂາຍໃຫ້ນັກທ່ອງທ່ຽວ

ສະພາບແວດລ້ອມພາຍໃນແຫຼ່ງທ່ອງທ່ຽວ

ໂດຍທົ່ວໄປ, ສະພາບແວດລ້ອມພາຍໃນແຫຼ່ງທ່ອງທ່ຽວແມ່ນຖືວ່າຍັງມີຄວາມອຸດົມສົມບູນ ມີຕົ້ນໄມ້ໃຫຍ່ນ້ອຍຫຼາຍປະເພດ ສະພາບປ່າໄມ້ຍັງຄົງຕົບຫນາ, ມີຄວາມສວຍງາມເຫມາະແກ່ການຍ່າງທ່ຽວຫຼິ້ນຢູ່ພາຍໃນ້ຖ້ຳ ແລະ ບໍລິເວນພາຍນອກຂອງຖ້ຳ. ສະພາບອາກາດຍັງຄົງສົດຊື່ນ ນັກທ່ອງທ່ຽວທີ່ມາທ່ຽວຊົມສະຖານທີ່ດັ່ງກ່າວສາມາດສໍາພັດກັບອາກາດບໍລິສຸດປາສະຈາກມົນລະພິດ ເຫມາະແກ່ການມາພັກຜ່ອນຕາກອາກາດຂອງນັກທ່ອງທ່ຽວຫຼາຍກຸ່ມ ແລະ ຫຼາຍເພດໄວ. ເວົ້າລວມແລ້ວ, ສະພາບ ຖ້ຳ ມີຄວາມສວຍສົດງົດງາມ ແລະ ອາກາດທີ່ບໍລິສຸດໃນເຂດດັ່ງກ່າວ ແມ່ນສາມາດດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວສາກົນໄດ້ເປັນຢ່າງດີ ໂດຍສະເພາະແມ່ນນັກທ່ອງທ່ຽວ ຈາກພາຍໃນ ແລະ ສາກົນ. ເພາະກຸ່ມນັກທ່ອງທ່ຽວດັ່ງກ່າວ ມີຄວາມນິຍົມຊົມຊອບສະຖານທີ່ທ່ອງທ່ຽວທີ່ມີອາກາດ ບໍລິສຸດ, ອາກາດທີ່ປາດສະຈາກມົນລະພິດ. ແຕ່ເຖິງຢ່າງໃດກໍຕາມ, ສະພາບການເກັບມ້ຽນຂີ້ເຫຍື້ອ ຫຼື ສິ່ງເສດເຫຼືອໃນບໍລິເວນແຫຼ່ງທ່ອງທ່ຽວໃນປັດຈຸບັນແມ່ນຖືວ່າຍັງເຮັດບໍ່ທັນໄດ້ດີ ບາງບ່ອນຍັງມີການ ຖິ້ມ ຂີ້ເຫຍື້ອແບບຊະຊາຍ.

3. ສະພາບ ດ້ານການທ່ອງທ່ຽວ

3.1 ພາຍໃນແຫຼ່ງທ່ອງທ່ຽວ

3.1.1 ການ ຄຸ້ມຄອງ ແລະ ການນໍ ໃຊ້ແຫຼ່ງທ່ອງທ່ຽວ

ປັດຈຸບັນ, ຖ້ຳ ຈອມ ອອງ ແມ່ນຢູ່ພາຍ ໃ ຕ້ ການຊີ້ ນໍ ຂອງ ຫ້ ອງ ການ ຖະ ແຫຼ ງ ຂ່ າ ວ, ວັ ດ ທ ະ ນ ະ ທ ໍ ແ ລ ະ ທ່ ອ ງ ທ່ ຽ ວ (ຖ ອ ທ) ເ ມ ອ ງ ໄ ຊ ຊຶ ່ ງ ມ ອ ບ ໃ ຫ ້ ບ ້ ານ ຈ ອ ມ ອ ອ ງ ເ ປ ັ ນ ຜ ູ ້ ບ ໍ ລ ິ ຫ ານ ແ ລ ະ ຄ ຸ ້ ມ ຄ ອ ງ ໂ ດ ຍ ກ ົ ງ . ແ ຕ ່ ເ ມ ື ່ ອ ງ ຈ າ ກ ວ ່ າ ປ ັ ດ ຈ ຸ ບ ັ ນ ພ ື ້ ນ ຖ ານ ໂ ຄ ງ ລ ່ າ ງ ສ ິ ່ ງ ຮ ອ ງ ຮ ັ ບ ດ ້ ານ ຕ ່ າ ງ ໆ ພ າ ຍ ໃ ນ ແ ຫ ຼ ່ ງ ທ ່ ອ ງ ທ ່ ຽ ວ ຍ ັ ງ ບ ໍ ່ ທ ັ ນ ໄ ດ ້ ຮ ັ ບ ການ ປ ັ ບ ປ ຸ ງ ແ ລ ະ ພ ັ ດ ທ ະ ນ າ ຈ ຶ ່ ງ ຍ ັ ງ ບ ໍ ທ ັ ນ ໄ ດ ້ ໃ ຫ ້ ມ ີ ການ ເ ກ ັ ບ ຄ ່ າ ທ ໍ ານ ຽ ມ ເ ຂ ົ ້ າ ຊ ົ ມ ແ ລ ະ ການ ບ ໍ ລ ິ ການ ຄ ຸ ້ ມ ຄ ອ ງ ກ ໍ ຍ ັ ງ ບ ໍ ທ ັ ນ ເ ປ ັ ນ ລ ະ ບ ົ ບ .

ປັດຈຸບັນ, ນັກທ່ອງທ່ຽວ ທ່ ໄ ປ ທ່ ຽ ວ ຖ ້ ຳ ຈ ອ ມ ອ ອ ງ ມ ີ ສ ອ ງ ຮ ູ ບ ແ ບ ບ ຮ ູ ບ ແ ບ ບ ທ ີ ່ ໜ ຶ ່ ງ : ແ ມ ່ ນ ມ ີ ບ ໍ ລ ິ ສ ັ ດ ນ ໍ ເ ທ ີ ່ ຍ ວ ຊ ົ ມ ການ ທ ່ ອ ງ ທ ່ ຽ ວ ຈ າ ກ ຫ ້ ວ ຍ ງ ານ ທ ່ ອ ງ ທ ່ ຽ ວ ແ ຂ ວ ງ ໂ ດ ຍ ມ ີ ພ ະ ນ ັ ກ ງ ານ ຈ າ ກ ພ ະ ແ ນ ກ ຖ ອ ທ ແ ຂ ວ ງ ໃ ຫ ້ ການ ບ ໍ ລ ິ ການ ແ ກ ່ ນ ັ ກ ທ ່ ອ ງ ທ ່ ຽ ວ ທ ່ ໄ ປ ທ ່ ຽ ວ ຊ ົ ມ ຖ ້ ຳ . ຮ ູ ບ ແ ບ ບ ທ ີ ສ ອ ງ : ແ ມ ່ ນ ນ ັ ກ ທ ່ ອ ງ ທ ່ ຽ ວ ເ ດ ີ ນ ທ າ ງ ເ ຂ ົ າ ໄ ປ ທ ່ ຽ ວ ຊ ົ ມ ເ ອ ງ ນ ັ ກ ທ ່ ອ ງ ທ ່ ຽ ວ ກ ຸ ່ ມ ນ ີ ້ ໄ ດ ້ ຂ ໍ ້ ມ ູ ນ ຈ າ ກ ການ ໂ ຄ ສ ະ ນ າ ປ ະ ເ ພ ດ ຕ ່ າ ງ ໆ ເ ຊ ັ ່ ນ : ທ າ ງ ອ ິ ນ ເ ຕ ີ ເ ນ ັ ດ , ແ ຜ ່ ນ ພ ັ ບ ໂ ຄ ສ ະ ນ າ ປ ະ ເ ພ ດ ຕ ່ າ ງ ໆ , ການ ບ ອ ກ ເ ລ ່ າ ປ າ ກ ຕ ່ ໍ ປ າ ກ , ການ ໂ ຄ ສ ະ ນ າ ທ າ ງ ໂ ທ ລ ະ ພ າ ບ , ແ ລ ະ ອ ື ່ ນ ໆ .

3.1.2 ສະພາບ ໂ ຄ ງ ສ ້ າ ງ ດ ້ ານ ການ ບ ໍ ລ ິ ການ

ປັດຈຸບັນ, ການບໍລິການພາຍໃນແຫຼ່ງທ່ອງທ່ຽວແມ່ນເກືອບວ່າບໍ່ທັນມີຫຍັງ ນ້ຳມີບ່ອນຂາຍປີ້ເຂົ້າຊົມ, ໄມ້ຫອ້ງນ້ຳຫານ້ຶ່ງຫ້ອງ (ແຕ່ນ້ຳໃຊ້ບໍ່ໄດ້), ບໍ່ມີການບໍລິການອາຫານ-ເຄື່ອງດື່ມ. ມີແຕ່ພະນັກງານນຳທ່ຽວ ທີ່ນຳພາແຂກເຂົ້າມາທ່ຽວໃນເຂດຖ້ຳຈອມອອງ ເປັນຜູ້ບໍລິການນັກທ່ອງທ່ຽວໂດຍກົງ ນັບທັງການກະກຽມອາຫານ-ເຄື່ອງດື່ມເຂົ້າມາ ແລະ ການແນະນຳຕ່າງໆ.

ຢູ່ໃນບ້ານຈອມອອງ ມີເຮືອນພັກແຮມລວມຂອງນັກທ່ອງທ່ຽວ 1 ຫຼັງ ສ້າງຂຶ້ນແຕ່ປີ 2007 ຊຶ່ງແມ່ນພະແນກທ່ອງທ່ຽວແຂວງ (ໃນເມື່ອກ່ອນ) ເປັນຜູ້ນຳພາຈັດຕັ້ງປະຕິບັດ ແລະ ປະຊາຊົນພາຍໃນບ້ານປະ ກອບສ່ວນວັດຖຸທີ່ມີໃນທ້ອງຖິ່ນ ແລະ ແຮງງານ. ປັດຈຸບັນ, ເຮືອນພັກແຮມດັ່ງກ່າວແມ່ນຊຸດໂຊມຫຼາຍແລ້ວ, ເຄື່ອງນອນ (ຜ້າເຊື່ອ, ຫມອນ, ມຸ້ງ) ກໍຢູ່ໃນສະພາບທີ່ເກົ່າ. ເພື່ອຮອງຮັບໃຫ້ແກ່ນັກທ່ອງທ່ຽວໃນຕໍ່ໜ້າ ຄວນມີການປັບປຸງເຮືອນພັກແຮມລວມ ລວມທັງເຄື່ອງໃຊ້ພາຍໃນກໍຕ້ອງໄດ້ປ່ຽນໃຫມ່.

ຮູບເຮືອນພັກແຮມລວມຂອງນັກທ່ອງທ່ຽວ

3.1.3 ການຄົມມະນາຄົມຂົນສົ່ງການເຂົ້າເຖິງແຫຼ່ງທ່ອງທ່ຽວ

ປັດຈຸບັນ, ສະພາບການເຂົ້າເຖິງແຫຼ່ງທ່ອງທ່ຽວແມ່ນຍັງບໍ່ມີຄວາມສະດວກສະບາຍເທົ່າ ໃນ ອງຈາກວ່າເສັ້ນທາງເຂົ້າແຫຼ່ງທ່ອງທ່ຽວແມ່ນຍັງເປັນທາງດິນແດງ, ເປັນທາງຂະໜາດ້ນ ອຍໄປຕາມລຽບເນີນພູ ແລະ ພົບຄວາມຫຍຸ້ງ ຍາກໃນລະດູຝົນ. ນັກທ່ອງທ່ຽວສາມາດເດີນທາງເຂົ້າ-ອອກ ໄດ້ສະເພາະລະດູແລ້ງ ເສັ້ນທາງຈາກເທດສະບານ ເມືອງໄຊ ຫາທາງແຍກເຂົ້າຖ້ຳປ້ ານຕາໄຫ (ໂລເມັດທີ ່ 24) ຊຶ ່ງເປັນທາງປູຢາງ. ແຕ ່ເສັ ້ນທາງເຂົ ້າຈາກທາງໃຫ ຍ ່ ຫາ ຖ ້ ຳຈອມອອງແມ ່ ນ ຍັ ງເປັ ນທາງດິ ນແດງ ຊ ຶ ່ ງມີ ຄວາມຍາວ 18 ກມ. ເສັ ້ ນທາງເຂ ົ ້ າໄລຍະ 18 ກມ ດ ່ ງ ກ ່ າວ ແມ ່ ນ ພ ະ ແນ ກ ທ ່ ອ ງ ທ ່ ຽ ວ ແ ຂ ວ ງ ອ ຸ ດ ົ ມ ໄ ຊ ໃ ນ ເ ມ ື ່ ອ ກ ່ ອ ນ ເ ປ ັ ນ ຜ ູ ້ ຂ ົ ນ ຂ ວ າ ຍ ຊ ອ ກ ຫ າ ແ ຫ ຼ ່ ງ ທ ຶ ນ ມ າ ປ ັ ບ ປ ຸ ງ ເ ພ ື ່ ອ ໃ ຫ ້ ນ ັ ກ ທ ່ ອ ງ ທ ່ ຽ ວ ເ ດ ີ ນ ທ າ ງ ເ ຂ ົ ້ າ ເ ຖ ິ ງ ຖ ້ ຳ ຈ ອ ມ ອ ອ ງ ໄ ດ ້ ສ ະ ດ ວ ກ ສ ະ ບ າ ຍ ກ ວ ່ າ ເ ກ ່ ົ ່ າ . ແ ຕ ່ ເ ມ ື ່ ອ ງ ຈ າ ກ ວ ່ າ ເ ສ ັ ້ ນ ທ າ ງ ດ ັ ່ ງ ກ ່ າ ວ ເ ປ ັ ນ ທ າ ງ ບ ຸ ກ ເ ບ ີ ກ ໃ ຫ ມ ່ ແ ລ ະ ຍ ັ ງ ເ ປ ັ ນ ທ າ ງ ດ ິ ນ ແ ດ ງ ຢ ່ ໃ ນ ຊ ່ ວ ງ ໄ ລ ຍ ະ ລ ະ ດ ູ ຝ ົ ນ ແ ມ ່ ນ ບ ໍ ່ ສ າ ມ າ ດ ເ ດ ີ ນ ທ າ ງ ເ ຂ ົ ້ າ ເ ຖ ິ ງ .

ສະພາບເສັ້ນທາງເຂົ້າເຖິງຖ້ຳຈອມອອງ

3.1.4 ວິກຈະກຳ ການທ່ອງທ່ຽວວິທີ່ມີພາຍໃນແຫ່ງທ່ອງທ່ຽວ

ວິກຈະກຳ ການທ່ອງທ່ຽວພາຍໃນແຫ່ງທ່ອງທ່ຽວວິທີ່ມີໃນປັດຈຸບັນແມ່ນ: ການທ່ຽວຊົມທິວັທດທຳ ມະຊາດປ່າ ໄມ້, ສັດປ່ານາໆຊະນິດ, ທ່ຽວຊົມຄວາມສວຍງາມພາຍໃນ້ຖ້ຳຈອມອອງ, ແລະ ການກິນ້ຂ້ຳປ່ຳ. ວິກຈະກຳໜ້ຳທ້ີ່ສ່ວນໜ້ຳຍແມ່ນັນກທ່ອງທ່ຽວພາຍໃນ ໂດຍສະເພາະແມ່ນປະຊຳຊົນໃນເຂດ ້ບານ້ີທ່ຳໃກ້ຄຽງ ້ຂ້ຳໄປ ້ຫ້ານ.

ຮູບພາບກິນ ້ຂ້ຳປ່ຳ(ໄປກິນກ) **ຮູບພາບ ້ໜ້ຳປ່ຳກ ້ຖ້ຳ**

3.2 ສະພາບ ້ດ້ານການທ່ອງທ່ຽວໃນເຂດພາຍນອກແລະ ເຂດໃກ້ຄຽງແຫ່ງທ່ອງທ່ຽວ

3.2.1 ສະພາບໂຄ ງ ້ສ ້ງ ້ດ້ານການ ້ບໍລິການພາຍນອກແຫ່ງທ່ອງທ່ຽວ

ເນ ່ ອ ງ ຈ ຳ ກ ວ ່ ຳ : ຖ ້ ຳ ຈ ອ ມ ອ ອ ງ ຢ ່ ູ ບ ່ ໍ ່ ຫ ່ ຳ ງ ໄ ກ ຈ ຳ ກ ເ ທ ດ ສ ະ ບ ຳ ນ ເ ມ ອ ງ ໄ ຊ ນ ັ ກ ທ ່ ອ ງ ທ ່ ຽ ວ ສ ່ ວ ນ ໜ ້ ຳ ຍ ຈ ່ ຶ ງ ເ ລ ອ ກ ໃ ຊ ້ ກ ຳ ນ ້ ໍ ລ ິ ກ ຳ ນ ່ ຢ ູ ່ ໃ ນ ເ ທ ດ ສ ະ ບ ຳ ນ ເ ມ ອ ງ ເ ຊ ່ ັ ນ : ສ ະ ຖ ຳ ນ ທ ີ ່ ພ ັ ກ ເ ຊ ົ ຳ , ອ ຳ ຫ ຳ ນ ກ ຳ ນ ກ ິ ນ ແ ລ ະ ອ ື ່ ນ ໆ . ປ ັ ດ ຈ ຸ ບ ັ ນ , ້ ໍ ່ ອ ເ ມ ອ ງ ໄ ຊ ມ ີ ໂ ຮ ງ ແ ຮ ມ 11 ແ ຫ ່ ງ , ມ ີ ເ ຮ ືອ ນ ພ ັ ກ ຈ ຳ ນ ວ ນ 25 ຫ ້ ອ ງ (ແ ຕ ່ ກ ຳ ນ ້ ໍ ລ ິ ກ ຳ ນ ນ ້ ໍ ຍ ້ ໍ ບ ໍ ລ ິ ກ ຳ ນ ແ ບ ບ ຄ ອ ບ ຄ ົ ວ), ມ ີ ຮ ຳ ນ ອ ຳ ຫ ຳ ນ 72 ້ ຮ ຳ ນ . ໃ ນ ເ ງ ື ່ ອ ນ ໄ ຂ ປ ັ ດ ຈ ຸ ບ ັ ນ ເ ຫ ັ ນ ວ ່ ຳ ສ ິ ່ ງ ຮ ອ ງ ຮ ັ ບ ດ ້ ຳ ນ ສ ະ ຖ ຳ ນ ທ ີ ່ ພ ັ ກ ເ ຊ ົ ຳ ແ ລ ະ ອ ຳ ຫ ຳ ນ ກ ຳ ນ ກ ິ ນ ແ ມ ່ ນ ພ ຽ ງ ກ ຳ ້ ບ ຄ ວ ຳ ມ ຕ ້ ອ ງ ກ ຳ ນ ແ ຕ ່ ຕ ້ ອ ງ ໄ ດ ້ ປ ັ ບ ປ ຸ ງ ກ ຳ ນ ບ ໍ ລ ິ ກ ຳ ນ ໃ ຫ ້ ດ ີ ຂ ຶ ້ ນ .

3.2.2 ການຄົມມະນາຄົມຂົນສົ່ງພາຍນອກແຫ່ງທ່ອງທ່ຽວ

ໂດຍທົ່ວໄປ, ສະພາບຄົມມະນາຄົມພາຍນອກແຫ່ງທ່ອງທ່ຽວແມ່ນສະດວກສະບາຍ ນັກທ່ອງທ່ຽວສາມາດເດີນທາງເຂົ້າເຖິງແຂວງອຸດົມໄຊທາງອາກາດ, ທາງລົດ ແລະ ທາງນ້ຳ.

<u>ທາງອາກາດ</u>: ນັກທ່ອງທ່ຽວທີ່ເດີນທາງດ້ວຍຍົນມາແຂວງອຸດົມໄຊ ແມ່ນເດີນທາງມາຈາກນະຄອນຫຼວງວຽງຈັນ ອາທິດ ລະ 3 ຖ້ຽວ (ວັນອັງຄານ, ວັນພະຫັດ ແລະ ວັນເສົາ). ນັກທ່ອງທ່ຽວທີ່ເດີນທາງມາດ້ວຍຍົນແມ່ນມີ 5%.

<u>ທາງລົດ</u>: ນັກທ່ອງທ່ຽວທີ່ເດີນທາງດ້ວຍລົດທີ່ມາຈາກບັນດາແຂວງພາກໃຕ້ ແລະ ແຂວງພາກກາງ ສາມາດຂຶ້ນລົດໄດ້ທີ່ ຄືອລົດສາຍເໜືອ. ສ່ວນນັກທ່ອງທ່ຽວທີ່ເດີນທາງມາຈາກປະເທດຈີນແມ່ນເດີນທາງເຂົ້າມາທາງຊາຍແດນບໍ່ເຕັນ (ເມືອງລາວ)-ບໍ່ຫານ (ເມືອງຈີນ). ນອກຈາກນີ້, ນັກທ່ອງທ່ຽວຍັງສາມາດເດີນທາງເຂົ້າເຖິງແຂວງອຸດົມໄຊ ໂດຍຜ່ານບັນດາແຂວງພາກເໜືອຂອງລາວໄດ້ ເຊັ່ນ: ຫຼວງນ້ຳທາ, ໄຊຍະບູລີ, ຫຼວງພະບາງ, ແລະ ຜົ້ງສາລີ. ສຳລັບນັກທ່ອງທ່ຽວທີ່ເດີນທາງມາດ້ວຍລົດແມ່ນປະມານ 70%

<u>ທາງນ້ຳ</u>: ສຳລັບນັກທ່ອງທ່ຽວທີ່ເດີນທາງມາທາງນ້ຳທີ່ເຂົ້າມາທາງເມືອງປາກແບ່ງກວມເອົາ 25% . ໃນນີ້, ແມ່ນ ເດີນທາງມາຈາກເມືອງຊຽງຂອງ, ແຂວງຊຽງລາຍ (ປະເທດໄທ), ແລະ ແຂວງຫຼວງພະບາງ.

3.2.3 ຜະລິດຕະພັນການທ່ອງທ່ຽວວິທີມໃນບໍລິເວນພາຍນອກແລະ ເຂດໃກ້ຄຽງ

ຢູ່ພາຍນອກແຫຼ່ງທ່ອງທ່ຽວ ຍັງມີຜະລິດຕະພັນການທ່ອງທ່ຽວອື່ນໆທີ່ຫຼາກຫຼາຍ ແຕ່ຍັງບໍ່ທັນໄດ້ຮັບການປັບປຸ ແລະ ພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວເທື່ອ ເຊັ່ນ: ອ່າງນ້ຳຫີນ ຊຶ່ງຫ່າງຈາກບ້ານຈອມອອງ 37 ຫຼັກ, ນ້ຳຕົກນົກກົກ ຢູ່ບ້ານ ຈອມອອງ, ຢູ່ບ້ານນ້ຳປຸະ ຍັງມີຖ້ຳຢາຄ້ວ, ຖ້ຳປູອງ, ແລະ ຖ້ຳຢະແສງ. ນອກຈາກນີ້, ຍັງມີຜະລິດຕະພັນຫັດຖະກຳ, ການ ຈັກສານ ຂອງປະຊາຊົນທ້ອງຖິ່ນ ເຊັ່ນ : ການທໍ່ຕ່າຫູກ, ການັຖກ໌ຖຸງປຽດ ແລະ ັຈກສານຂອງປະຊາຊົນເຜົ່ຖ໌ກມຸ໌ລ. ນອກຈາກັນນ,ັຍງັມີການ໌ຕົມເຫ໌ົາແບ໌ົພ໌ມ້ບານ ແລະ ວິຖີການດຳລົງຊີວິດຂອງປະຊາຊົນໃນເຂດ ດັ່ງກ່າວ.

3.2.4 ກິດຈະກຳ ການທ່ອງທ່ຽວ ການ໌ສ້າງເຄືອຄ່າຍຜະລິດ ແລະ ສະໜອງຜະລິດຕະພັນການທ່ອງທ່ຽວ

ກິດຈະກຳການທ່ອງທ່ຽວ, ການ໌ສ້າງເຄືອຄ່າຍ ແລະ ການສະໜອງຜະລິດຕະພັນການທ່ອງທ່ຽວ ໃນປັດຈຸບັນ ແມ່ນເກືອບວ່າບໍ່ທັນມີ. ເນື່ອງຈາກເຫດຜົນດ້ານຕ່າງໆທີ່ໄດ້ກ່າວມາຂ້າງເທິງ ເຊັ່ນ: ປະຊາຊົນໃນເຂດໃກ້ຄຽງຍັງບໍ່ທັນມີ ຄວາມເຂົ້າໃຈກ່ຽວກັບວຽກງານການທ່ອງທ່ຽວ ແລະ ການສະໜອງຜະລິດຕະພັນທ່ອງທ່ຽວ, ປະຊາຊົນສ່ວນຫຼາຍຍັງບໍ່ ທັນມີຄວາມເຂົ້າໃຈກ່ຽວກັບຄວາມຕ້ອງການຂອງນັກທ່ອງທ່ຽວ ແລະ ບໍ່ທັນຮູ້ຈັກວິທີການທີ່ຈະເຮັດໃຫ້ຜະລິດຕະພັນຂອງ ທ້ອງຖິ່ນ ກາຍເປັນຜະລິດຕະພັນທີ່ສາມາດ ຂາຍໃຫ້ນັກທ່ອງທ່ຽວ. ດັ່ງນັ້ນ, ການແນະນຳກ່ຽວກັບກິດຈະກຳ, ການສ້າງເຄືອ ຄ່າຍ ແລະ ສະໜອງຜະລິດຕະພັນທ່ອງທ່ຽວໃນເຂດດັ່ງກ່າວແມ່ນມີຄວາມສຳຄັນຊຶ່ງຈະແນະນຳໃນພາກຕໍ່ໄປ.

3.2.5 ການເຊື່ອມໂຍງກັບແຫຼ່ງທ່ອງທ່ຽວອື່ນໆ

ແຜນທີ່ເຊື່ອມຕໍ່ກັບແຫຼ່ງທ່ອງທ່ຽວອື່ນໆພາຍໃນແຂວງ

3.2.6 ຕະຫຼາດນັກທ່ອງທ່ຽວ

ອີງຕາມສະຖິຕິນັກທ່ອງທ່ຽວຈີທ່ມາທ່ຽວແຂວງອຸດົມໄຊ ແຕ່ປີ 2008-2012 ແມ່ນເພີ່ມຂຶ້ນ ..... ຕໍ່ປີ ສຳລັບປີ 2012 ສາມາດ້ສ່າງລາຍຮັບເຂ້ົາພາຍໃນແຂວງໄດ້ເຖິງ ..... ້ລ້ານໂດລາສະຫ ັລດ, ທຽບໃສ່ປີ 2011 ແມ່ນລື່ນ .....%. ຈຳນວນມື້ທີ່ນັກທ່ອງທ່ຽວສາກົນພັກເຊົ ່ຢູ່ແຂວງອຸດົມໄຊ ສະເລ່ຍແມ່ນ 1,5 ວັນ. ຈຳນວນນັກທ່ອງທ່ຽວທີ່ເຂ້ົາມາທ່ຽວແຂວງອຸດົມໄຊທີ່ກວມຈຳນວນຫຼາຍແມ່ນມາຈາກປະເທດ ຈີນ, ຝະລັ່ງ, ອັງກິດ ແລະ ອື່ນໆ. ອີງຕາມສະຖິຕິຈາກຂະແໜງການທ່ອງທ່ຽວ, ພະແນກ ຖວທ ແຂວງອຸດົມໄຊ ໃນປີ 2012 ຈຳນວນນັກທ່ອງທ່ຽວທີ່ມາຈາກປະເທດຈີນແມ່ນ 25.733 ຄົນ, ນັກທ່ອງທ່ຽວທີ່ມາຈາກປະເທດຝະລັ່ງ ຈຳນວນ 10.256 ຄົນ, ແລະ ນັກທ່ອງທ່ຽວມາຈາກປະເທດອັງກິດ ແມ່ນ 4.104 ຄົນ.

ເຫດຜົນທີ່ນັກທ່ອງທ່ຽວສາກົນຮັບຮູ້ຂໍ້ມູນຂ່າວສານກ່ຽວກັບການທ່ອງທ່ຽວແຂວງອຸດົມໄຊ ກ ໍ ຍ ້ ອ ນ ວ ່ າ ທ າ ງ ແ ຂ ວ ງ ໄ ດ ເ ຂ ົ ້ າ ຮ ່ ວ ມ ງ ານ ວ າ ງ ສ ະ ແ ດ ງ ຂ ໍ ້ ມ ູ ນ ຂ ່ າ ວ ສ ານ ກ ານ ທ ່ ອ ງ ທ ່ ຽ ວ ຢ ູ ່ ບ ັ ນ ປ ະ ເ ທ ດ GMS ເ ຊ ັ ່ ນ : ຈ ັ ງ ຫ ວ ັ ດ ຂ ອ ນ ແ ກ ນ , ຊ ຽ ງ ຮ າ ຍ ລ າ ດ ຊ ະ ອ ານ າ ຈ ັ ກ ໄ ທ , ຄ ຸ ນ ມ ິ ງ , ຊ ຽ ງ ຮ ຸ ງ , ນ ະ ຄ ອ ນ ພ ູ ເ ອ ີ ສ ປ ຈ ີ ນ ແ ລ ະ ແ ຂ ວ ງ ດ ຽ ນ ບ ຽ ນ , ฮ า ໂ ນ ย , ส ส ห ว ฽ ด น า ม จ ำ น ว น 6 ຄ ັ ້ ง . ຈ ຶ ่ ง ໄ ດ ้ ເ ຮ ັ ດ ໃ ຫ ้ ຂ ໍ ้ ມ ູ ນ ຂ ่ າ ວ ສ ານ ກ ານ ທ ่ ອ ງ ທ ่ ຽ ວ ຂ ອ ງ ແ ຂ ວ ງ ໄ ດ ้ ຮ ັ ບ ກ ານ ໂ ຄ ສ ะ ນ າ ຢ ่ າ ງ ກ ้ ວ າ ງ ຂ ວ າ ງ ອ ອ ກ ສ ู ่ ໂ ລ ກ ພ າ ຍ ນ ອ ກ .

ສະຖິຕິນັກທ່ອງທ່ຽວວິທ່ມາທ່ຽວແຂວງອຸດົມໄຊສໍາລັບປີ 2006-2012

ປີ	ຈໍານວນນັກທ່ອງທ່ຽວ	ຈໍານວນລາຍຮັບ
2008	101,761	
2009	107,419	
2010	113,826	
2011	133,629	
2012	142,308	

III. ການວິເຄາະຈຸດດີ, ຈຸດອ່ອນ, ການລະໂອກາດ, ແລະສິ່ງທ້າທາຍ (SWOT Analysis)

ຈາກຜົນການສຶກສາຂໍ້ມູນເບື້ອງຕົ້ນ ໃນການພັດທະນາການທ່ອງທ່ຽວຢູ່ແຫຼ່ງທ່ອງທ່ຽວຖ້ຳຈອມອອງໃນໄລຍະຜ່ານມາ, ພວກເຮົາສາມາດວິເຄາະຈຸດດີ, ຈຸດອ່ອນ, ການລະໂອກາດ ແລະສິ່ງທ້າທ້າຍ ໃນການພັດທະນາ ແລະຄຸ້ມຄອງການທ່ອງທ່ຽວໃນສະເພາະໜ້າ ແລະ ຍາວນານ ໄດ້ດັ່ງນີ້:

ຈຸດດີ	ຈຸດອ່ອນ
ດ້ານເສດຖະກິດ - ປະຊາຊົນຈອມອອງມີມູນເຊື້ອດຸໝັ່ນໃນການທຳມາຫາກິນໂດຍມີອາຊີບຕົ້ນຕໍແມ່ນເຮັດໄຮ່, ປູກຝັງ ແລະ ລ້ຽງສັດ. - ເສັ້ນທາງເຂົ້າເຖິງຖ້ຳຈອມອອງ ບໍ່ຫ່າງໄກຈາກເທດສະບານເມືອງໄຊ ມີໄລຍະທາງພຽງແຕ່ 44 ກິໂລແມັດ.	**ດ້ານເສດຖະກິດ** - ການທຳມາຫາກິນຂອງປະຊາຊົນແມ່ນເຮັດການຜະລິດພຽງແຕ່ກຸ້ມກິນແກ້ໄຂຊີວິດການເປັນຢູ່ຂອງຄອບຄົວຍັງບໍ່ມີການຜະລິດໝວງໝາຍສາມາດຂາຍອອກເປັນສິນຄ້າໄດ້. - ບໍ່ມີຜະລິດຕະພັນທ່ອງທ່ຽວເພື່ອຕອບສະໜອງໃຫ້ນັກທ່ອງທ່ຽວ ມີ ພຽງແຕ່ການຕ່ຳໜູກເພື່ອນຳໃຊ້ໃນຄອບຄົວ. - ບ້ານຈອມອອງ ແມ່ນຍັງນອນໃນເຂດບ້ານທີ່ທຸກຍາກ ຍັງບໍ່ທັນໄດ້ຮັບການພັດທະນາ. - ໂຄງລ່າງພື້ນຖານບ້ານຍັງບໍທັນໄດ້ຮັບການພັດທະນາໂດຍສະເພາະເສັ້ນທາງເຂົ້າເຖິງບ້ານ ແລະ ແຫຼ່ງທ່ອງທ່ຽວມີຄວາມຫຍຸ້ງຍາກໃນລະດູຝົນ. ນອກນັ້ນ, ການສື່ສານໂຄລະຄົມຍັງບໍ່ທົ່ວເຖິງ. - ພາຍໃນບໍລິເວນບ້ານ ແລະ ແຫຼ່ງທ່ອງທ່ຽວຍັງບໍ່ມີການບໍລິການທ່ອງທ່ຽວ, ບໍ່ມີຮ້ານອາຫານແລະ

	ຮ້ານກິນດື່ມ, ມີພຽງແຕ່ຮ້ານຂາຍເຄື່ອງຍ່ອຍນ້ອຍແຕ່ກະແຈກກະຈາຍ. - ຄວາມຮັບຮູ້ດ້ານການທ່ອງທ່ຽວຂອງປະຊາຊົນແມ່ນຍັງບໍ່ທັນສູງດັ່ງນັ້ນ, ຈຶ່ງບໍ່ທັນສາມາດນຳໃຊ້ທ່າແຮງຂອງທຳມະຊາດທີ່ມີເພື່ອສ້າງກິດຈະກຳການທ່ອງທ່ຽວເພື່ອສ້າງລາຍໄດ້ມາໃຫ້ປະຊາຊົນທີ່ອາໄສຢູ່ໃນເຂດດັ່ງກ່າວ.
ດ້ານວັດທະນະທຳ-ສັງຄົມ - ພາຍໃນບ້ານຍັງຮັກສາມູນເຊື້ອຮີດຄອງປະເພນີດັ້ງເດີມ ໂດຍສະເພາະບຸນປະເພນີປະຈຳບ້ານ ເຊັ່ນ: ບຸນເຕັດນຶມ ຊຶ່ງກິດຈະກຳດັ່ງກ່າວຈະເປັນພື້ນຖານໃນການຮັບໃຊ້ກິດຈະກຳການທ່ອງທ່ຽວໃນອານະຄົດ. - ພາຍໃນບ້ານມີຄວາມສະຫງົບ, ປອດໄພ, ມີຄວາມສາມັກຄີ, ມີອັດຕະຍາໄສໄມຕີທີ່ດີ ແລະ ມີຄວາມໂອບເອື້ອອາລີ ເຊິ່ງກັນ ແລະ ກັນ. - ບ້ານມີແຜນແລະມາດຕະການສ້າງເປັນບ້ານພັດທະນາ, ມີການກຳນົດແຜນການຈັດຕັ້ງປະຕິບັດປະຈຳປີ. - ມີອົງການຈັດຕັ້ງຂອງບ້ານ, ໜ່ວຍແມ່ຍິງ, ແນວໂຮມ ແລະ ປ້ອງ ກັນຄວາມສະຫງົບທີ່ມີຄວາມເຂັ້ມແຂງເປັນທີ່ນັບຖືຂອງປະຊາຊົນ.	**ດ້ານວັດທະນະທຳ-ສັງຄົມ** - ປະຊາຊົນຈຳນວນໜຶ່ງບໍ່ທັນມີຄວາມຮູ້ແລະເຂົ້າໃຈກ່ຽວກັບວຽກງານການທ່ອງທ່ຽວກໍ່ຄືວຽກງານການພັດທະນາເສດຖະກິດ-ສັງຄົມທົ່ວໄປໄດ້ເລີກເຊິ່ງ. - ການສ້າງຈິດສຳນຶກດ້ານການອະນຸລັກສິ່ງ ແວດລ້ອມ ແລະ ຮັກສາວັດທະນາທຳ ຂອງທ້ອງຖິ່ນໃຫ້ຄົນລຸ້ນຫຼັງໄດ້ສືບທອດໃນນີ້ລວມທັງການສືບທອດວິຊາການໃນການທຳມາຫາກິນຍັງບໍ່ທັນໄດ້ປະຕິບັດຢ່າງຕໍ່ເນື່ອງ. - ປະຊາຊົນພາຍໃນບ້ານ ຍັງມີຮີດຄອງຮັກສາຮີດເກົ່າຄອງຫຼັງ ເຊື່ອຖືແບບງົມງວາຍ ບາງ ຄັ້ງ ຄາວເຮັດໃຫ້ການປິ່ນປົວພະຍາດຕ່າງໆ ກໍ່ບໍ່ຖືກຕາມຫຼັກສາທາລະນະສຸກ. - ການໂຄສະນາແລະການສະໜອງຂໍ້ມູນຂ່າວສານການທ່ອງທ່ຽວທີ່ຈຳເປັນກ່ຽວກັບແຫຼ່ງທ່ອງທ່ຽວຍັງບໍ່ທັນມີ. - ຂາດການອະນຸລັກຟື້ນຟູທາງດ້ານສິນລະປະວັດທະນະທຳພື້ນບ້ານໂດຍສະເພາະແມ່ນວິຖີຊີວິດຫັດຖະກຳແລະອື່ນໆ. - ຄວາມຮູ້ໃນການພັດທະນາຜະລິດຕະພັນທ່ອງທ່ຽວຍັງຈຳກັດ.
ດ້ານສິ່ງແວດລ້ອມ - ແຫຼ່ງທ່ອງທ່ຽວຖ້ຳຈອມອອງ ນອນໃນເຂດປ່າ	**ດ້ານສິ່ງແວດລ້ອມ** - ມີການຕັດໄມ້ທຳລາຍປ່າຢ່າງຫຼວງຫຼາຍພາຍໃນ

ສະຫງວນຂອງບ້ານຈອມອອງ. - ແຫຼ່ງທ່ອງທ່ຽວຖ້ຳຈອມອອງ ໄດ້ຖືກທຳມະຊາດ ເສກສັນປັ້ນແຕ່ງຢ່າງສວຍສົດງົດງາມ ແລະ ໜ້າ ອັດສະຈັນ, ປະດັບດ້ວຍຫີນງອກ, ຫີນຍ້ອຍ ເປັນ ຫຼາຍຮູບຫຼາຍແບບ ເຮັດໃຫ້ຜູ້ທີ່ພົບເຫັນມີຄວາມ ປະທັບໃຈ ແລະ ໜ້າຫງຶດຫງໍ້ອັດສະຈັນ. - ຍັງມີປ່າໄມ້ທີ່ອຸດົມສົມບູນປົກຄຸມຢູ່ ແລະທົ່ວທັດທີ່ ສວຍງາມມີຄວາມອຸດົມສົມບູນ ແລະ ມີຊີວະນາໆ ພັນຫຼາຍ. - ສະພາບດິນຟ້າອາກາດໃນເຂດນີ້ມີຄວາມອຸດົມສົມ ບູນ, ບໍລິສຸດ, ສົດຊື່ນ ແລະ ອາກ າດຊຸ່ມເຢັນດີ ຕະຫລອດປີ. - ປະຊາຊົນຈຳນວນໜຶ່ງໄດ້ຮັບການປູກຈິດສຳນຶກ ກ່ຽວກັບການອະນຸລັກຮັກສາສິ່ງແວດລ້ອມໃນແຫຼ່ງ ທ່ອງທ່ຽວ ແລະ ເຮັດ ໃຫ້ປະຊາຊົນມີສ່ວນຮ່ວມໃນ ການອະນຸລັກສິ່ງແວດລ້ອມດັ່ງກ່າວ.	ບໍລິເວນຖ້ຳ ແລະ ບໍລິເວນໃ ກ້ຄຽງ ຊຶ່ງອາດ ພາໃຫ້ມີຜົນກະທົບຕໍ່ປະລິມານນ້ຳ ແລະ ການ ເຊາະເຈື່ອນຂອງດິນໃນອານາຄົດ. - ຍັງມີການຖາງປ່າເຮັດໄຮ່, ມີການບຸກລຸກນຳໃຊ້ ພື້ນທີ່ປ່າຢ່າງຊະຊາຍ. - ມີການຖິ້ມຂີ້ເຫຍື້ອຊະຊາຍໃນແຫລ່ງທ່ອງທ່ຽວ.
ໂອກາດ	**ສິ່ງທ້າທາຍ**
- ອຳນາດການປົກຄອງແຂວງ ເຫັນຄວາມສຳຄັນ ຂອງຖ້ຳຈອມອອງ ແລະ ເປີດໂອກາດໃຫ້ ພາກສ່ວນຕ່າງໆ ພ້ອມທັງນັກສຳຫຼວດຈາກຕ່າງ ປະເທດເຂົ້າມາສຳຫຼວດ ແລະ ວາງ ແຜນ ພັດທະນາໃນອະນາຄົດ. - ແຫຼ່ງທ່ອງທ່ຽວຖ້ຳຈອມອອງ ແມ່ນນອນຢູ່ໃນເຂດ ປ່າສະຫງວນຂອງບ້ານ ຊຶ່ງອຸດົມສົມບູນໄປດ້ວຍ ປ່າໄມ້ ແລະ ຫວ້ຍນ້ຳໃສເຢັນ ສາມາດເຮັດ ກິດຈະກຳໄດ້ຫຼາຍຢ່າງເຊັ່ນ: ຍ່າງປ່າ ແລະ ຕັ້ງ ແຄ້ມປົກນິກ(ກິນເຂົ້າປ່າ) - ແຫຼ່ງທ່ອງທ່ຽວຖ້ຳຈອມອອງແມ່ນຈັດຢູ່ໃນບູລິມະ ສິດການພັດທະນາຂອງເມືອງໄຊ ແລະ ຂອງ ແຂວງອຸດົມໄຊ. - ເປັນຖ້ຳທີ່ມີຄວາມສວຍງາມ ແລະ ມີ ຄວາມຍາວ ຂອງຖ້ຳເຖິງ 15 ກິໂລແມັດ ເຮັດໃຫ້ເປັນທີ່ສົນໃຈ	- ແຫຼ່ງທ່ອງທ່ຽວດັ່ງກ່າວຍັງບໍ່ມີການຈັດສັນ,ກຳນົດ ເຂດ ແລະ ຄຸ້ມ ຄອງທີ່ເປັນລະບົບ ອາດມີການ ຈັບຈ່ອງພື້ນທີ່ຊະຊາຍ. - ຂາດວິຊາການໃນການພັດທະນາ ແລະ ຄຸ້ມຄອງ ແຫຼ່ງທ່ອງທ່ຽວໃນລະດັບເມືອງທີ່ຈະຊ່ວຍຊີ້ນຳໃຫ້ ບ້ານໃນການສ້າງກິດຈະກຳ,ພັດທະນາ,ຄຸ້ມຄອງ ແຫຼ່ງທ່ອງທ່ຽວດັ່ງກ່າວໃຫ້ມີຄວາມຍືນຍົງ. - ການຕັດໄມ້ທຳລາຍປ່າຈະເຮັດໃຫ້ເນື້ອທີ່ຂອງປ່າ ໄມ້ຫຼຸດລົງ ມີ ຜົນກະທົບເຖິງສະພາບແວດລ້ອມ ແລະ ຊີວະນາໆພັນທີ່ອາໄສຢູ່ເຂດດັ່ງກ່າວ. - ຖ້າຫາກອຳນາດການປົກຄອງແຂວງ ເປີດ ໂອກາດໃຫ້ນັກລົງທຶນເຂົ້າມາພັດທະນາ, ຜູ້ສຳ ປະທານກໍຄວນມີການພັດທະນາສ້າງສິ່ງອຳນວຍ ຄວາມສະດວກດ້ານຕ່າງໆໃນຂອບເຂດທີ່ໄດ້ຈັດ ສັນ ແລະ ກຳນົດ ໄວ້. ນອກນັ້ນ, ຕ້ອງມີສ່ວນ

ຂອງນັກລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອລົງທຶນພັດທະນາເຂົ້າໃສ່ວຽກງານທ່ອງທ່ຽວ. - ຜົນຂອງການສຳຫຼວດ ແລະ ຈັດ ສັນກຳນົດເຂດແຫຼ່ງທ່ອງທ່ຽວ ຈະ ເປັນການຊ່ວຍແນະນຳທິດທາງໃນການພັດທະນາ ແລະ ຄຸ້ມ ຄອງການທ່ອງທ່ຽວ ດັ່ງກ່າວໃຫ້ແກ່ພາກສ່ວນກ່ຽວຂ້ອງເພື່ອມີການຈັດ ສັນງົບປະມານໃນການພັດທະນາແຕ່ລະປີ. - ຈະເປັນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ທ້ອງຖິ່ນ ແລະ ເປັນສ້າງລາຍຮັບເພີ້ມຈາກ ການທ່ອງທ່ຽວໃຫ້ປະຊາຊົນໃນທ້ອງຖິ່ນ.	ຮ່ວມຂອງປະຊາຊົນທ້ອງຖິ່ນໃນຈັດຕັ້ງກິດຈະກຳ ຕ່າງໆ ເພື່ອສ້າງວຽກເຮັດງານທຳໃຫ້ແກ່ທ້ອງ ຖິ່ນ. - ການລົງທຶນພັດທະນາແຫລ່ງທ່ອງທ່ຽວຕ້ອງໄດ້ ໃຊ້ງົບປະມານທີ່ສູງ, ຜົນກະທົບຫນ້ອຍ ແຕ່ໃຊ້ ເວລາຫລາຍປີຈຶ່ງໄດ້ທຶນຄືນ. - ໃນອານະຄົດຖ້ຳຈອມອອງໄດ້ຮັບການພັດທະນາ ບັນຫາໄພສັງຄົມ, ຢາເສບຕິດ, ການເຊື່ອມ ວັດທະນະທຳຕາເວັນຕົກ ແລະ ອື່ນໆ ກໍ່ອາດ ເກີດຂຶ້ນ ຖ້າຫາກປະຊາຊົນບໍ່ມີຄວາມໜັກແໜ້ນ ເຂັ້ມແຂງ. - ຖ້າຫາກບໍ່ມີລະບຽບການທີ່ຮັດກຸມກໍ່ອາດເຮັດໃຫ້ມີ ການທຳລາຍສະພາບແວດລ້ອມພາຍໃນແຫລ່ງ ທ່ອງທ່ຽວ. - ເມື່ອມີການພັດທະນາແຫລ່ງທ່ອງທ່ຽວແລ້ວ ການ ຊອກຫາການຕະຫລາດທ່ອງທ່ຽວບໍ່ກວ້າງຂວາງ. - ຖ້າຫາກແຫລ່ງທ່ອງທ່ຽວໄດ້ຮັບການພັດທະນາມີ ສິ່ງອຳນວຍຄວາມສະດວກຕ່າງໆ ປະຊາຊົນ ແລະ ອຳນາດ ການປົກຄອງທ້ອງຖິ່ນ ບໍ່ ມີສ່ວນ ຮ່ວມເປັນເຈົ້າການໃນການປົກປັກຮັກສາ ກໍ່ ເຮັດ ໃຫ້ໂຄງລ່າງຕ່າງໆບໍ່ມີຄວາມຍືນຍົງ.

IV. ທິດທາງການພັດທະນາ ແລະ ຄຸ້ມຄອງແຫຼ່ງທ່ອງທ່ຽວ

1. ວິໄສທັດ, ເປົ້າຫມາຍ ແລະ ຈຸດປະສົງ

ວິໄສທັດ

"ພັດທະນາຖ້ຳຈອມອອງ, ເມືອງໄຊ ແຂວງອຸດົມໄຊ ໃຫ້ເປັນແຫຼ່ງທ່ອງທ່ຽວທຳມະຊາດທີ່ໂດດເດ່ນຂອງແຂວງອຸດົມ ໄຊ, ພັດທະນາທິດຈະກຳການທ່ອງທ່ຽວທີ່ຫຼາກຫຼາຍ ເຫມາະກັບຫຼາຍກຸ່ມເຄົ້ນ, ເປັນຈຸດຫມາຍປາຍທາງການທ່ອງທ່ຽວແຫ່ງ ຫນຶ່ງຂອງບັນດາແຂວງພາກເຫນືອຂອງລາວ ແນໃສ່ສົ່ງເສີມຄວາມເປັນເອກະລັກສະເພາະຂອງວັດທະນະທຳ ແລະ ການມີ ສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ ຊ່ວຍສ້າງລາຍຮັບໃຫ້ປະຊາຊົນແລະ ອຳນາດການປົກຄອງແຂວງ".

ເປົ້າຫມາຍ

- ປັບປຸງ ແລະ ພັດທະນາໂຄງລ່າງພື້ນຖານພາຍໃນ ແລະ ພາຍນອກແຫຼ່ງທ່ອງທ່ຽວໃຫ້ມີຄວາມສະດວກ;
- ຈັດສັນພື້ນທີ່ແຕ່ລະເຂດໃຫ້ຈະແຈ້ງ (ເຂດກັນຊົນ, ເຂດອະນຸລັກ, ເຂດສະຫງວນ, ແລະ ເຂດບໍລິການ);
- ກຳນົດກິດຈະກຳທີ່ຈັດຕັ້ງປະຕິບັດໄດ້ພາຍໃນ ແລະ ພາຍນອກແຫຼ່ງທ່ອງທ່ຽວ;
- ຊ່ວຍສ້າງບຸກຄະລາກອນຂັ້ນບ້ານ ແລະ ຂັ້ນເມືອງໃຫ້ມີຄວາມເຂັ້ມແຂງ;
- ອະນຸລັກ ແລະ ສົ່ງເສີມວັດທະນະທຳຂອງຊົນເຜົ່າໃນທ້ອງຖິ່ນ, ຊ່ວຍເຮັດໃຫ້ປະຊາຊົນມີວຽກເຮັດງານທຳ;
- ໂຄສະນາຂໍ້ມູນຂ່າວສານກ່ຽວກັບແຫຼ່ງທ່ອງທ່ຽວທຳມະຊາດຖ້ຳຈອງອອງ ໂດຍຜ່ານພາຫະນະສື່ມວນຊົນດ້ານຕ່າງໆ.

ເປົ້າໝາຍດັ່ງກ່າວຂ້າງເທິງນີ້ ເປັນການສ້າງໂອກາດໃຫ້ປະຊາຊົນເຂດບ້ານຈອມອອງ, ເມືອງໄຊ, ແຂວງອຸດົມໄຊໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມທີ່ດີຂຶ້ນ ທັງທາງກົງ ແລະ ທາງອ້ອມ. ທັງເປັນການສ້າງເງື່ອນໄຂໃຫ້ບ້ານຈອມອອງ ແລະ ບັນດາບ້ານທີ່ໃກ້ຄຽງ ມີການພັດທະນາໃນດີຂຶ້ນ ໂດຍສະເພາະແມ່ນການບໍລິການທີ່ນຳໃຊ້ທ່າແຮງຂອງຖ້ຳຈອມອອງ. ພ້ອມທັງເປັນການດຶງດູດໃຫ້ນັກທ່ອງທ່ຽວທັງພາຍ ໃນ ແລະ ຕ່າງປະເທດ ໄດ້ຮູ້ຈັກແຫຼ່ງທ່ອງທ່ຽວດັ່ງກ່າວຫຼາຍຂຶ້ນ ແລະ ໃຊ້ເວລາໃນການມາທ່ຽວຫຼາຍຂຶ້ນ.

ຈຸດປະສົງ:

ເພື່ອສ້າງໂອກາດໃຫ້ປະຊາຊົນທ້ອງຖິ່ນໄດ້ມີສ່ວນຮ່ວມໃນການພັດທະນາ ແລະ ຄຸ້ມ ຄອງແຫຼ່ງທ່ອງທ່ຽວ ທັງເປັນການສ້າງເງື່ອນໄຂໃຫ້ບ້ານຈອມອອງ ໃຫ້ມີຄວາມເຂັ້ມແຂງ ສາມາດນຳໃຊ້ທ່າແຮງຂອງຖ້ຳຈອມອອງ, ສ້າງໃຫ້ເປັນກິດຈະກຳການບໍລິການທີ່ຫຼາກຫຼາຍ ແລະ ມີຄວາມຍືນຍົງ. ເພື່ອບັນລຸເປົ້າໝາຍດັ່ງກ່າວມາຂ້າງເທິງນີ້ ມີຄວາມຈຳເປັນທີ່ຈະຕ້ອງໄດ້ກຳນົດບັນດາແຜນງານ ແລະ ໂຄງການທີ່ຈະຕ້ອງໄດ້ປະຕິບັດໃນຕໍ່ໜ້າໂດຍການມີສ່ວນຮ່ວມຈາກພາກສ່ວນຕ່າງໆ.

2. ການກຳນົດແບ່ງເຂດພາຍໃນແຫຼ່ງທ່ອງທ່ຽວທຳມະຊາດ

ການກຳນົດແບ່ງເຂດ ຫຼື Zoning ແມ່ນເພື່ອກຳນົດພື້ນທີ່ແຕ່ລະເຂດໃຫ້ລະອຽດ. ອີງຕາມຜົນ ຂອງການສຳຫຼວດ , ການເກັບກຳຂໍ້ມູນ ແລະ ການປຶກສາຫາລືພາຍໃນທີມງານສຳຫຼວດ ຈຶ່ງໄດ້ກຳນົດ ຂອບເຂດພື້ນທີ່ຖ້ຳຈອມອອງ ແລະ ຈັດສັນເຂດເປັນ 4 ເຂດ ຄື: ເຂດກັນຊົນ, ເຂດອະນຸລັກ, ເຂດສະ ຫງວນ, ແລະ ເຂດບໍລິການ. ສຳລັບແຜນຜັງກຳນົດເນື້ອທີ່ ແລະ ເນື້ອໃນລາຍລະອຽດຂອງການ ຈັດສັນພື້ນທີ່ແຕ່ລະເຂດ ມີດັ່ງລຸ່ມນີ້:

ແຜນທີ່ກຳນົດເນື້ອທີ່ແລະ ການຈັດສັນເຂດ

- **ເຂດກັນຊົນ**

ແມ່ນເຂດພື້ນທີ່ທີ່ຕິດກັບຖ້ຳຈອງອອງ ຊຶ່ງມີຂອບເຂດຈຳກັດໃນການນຳໃຊ້ ແລະ ການພັດທະ ນາ. ເຂດດັ່ງກ່າວ ແມ່ນບໍ່ອະນຸຍາດໃຫ້ມີກິດຈະກຳ ແລະ ການກໍ່ສ້າງໃດໆທັງຫມົດ ເພື່ອປົກປັກຮັກສາ ບໍ່ໃຫ້ບຸກຄົນເຂົ້າມາຕັດໄມ້ທຳລາຍປ່າ ໃນເຂດອະນຸລັກ. ໃນນີ້ເຂດກັນຊົນມີເນື້ອທີ່ທັງຫມົດ ..... ເຮັກ ຕາ.

- **ເຂດອະນຸລັກ**

~~**ແມ່ນເຂດທີ່ບໍ່ອະນຸຍາດໃຫ້ມີການປຸກສ້າງສິ່ງອຳນວຍຄວາມສະດວກດ້ານຕ່າງໆ ແຕ່ສາມາດປັບ ປຸງບຸລະນະໄດ້ ເຊັ່ນ: ການເຮັດອະນາໄມສິ່ງກີດຂວາງເພື່ອອະນຸລັກເຂດດັ່ງກ່າວໃຫ້ຢູ່ໃນສະພາບເດີມ ແລະ ຮັກສາຄວາມສວຍງາມຂອງທຳ ມະຊາດໃນເຂດດັ່ງກ່າວ ນອກຈາກນີ້, ພາຍໃນເຂດອະນຸລັກຍັງ ສາມາດດັດປັບພື້ນທີ່ໄດ້ ເພື່ອໃຫ້ມີຄວາມສະດວກສະບາຍ ກວ່າເກົ່າ ເຊັ່ນ: ປັບພື້ນທີ່ຫນ້າດິນໃຫ້ສາມາດຍ່າງ ຫຼື ເດີນທາງໄປ ມາໄດ້ສະດວກກວ່າເກົ່າ**~~

- **ເຂດສະຫງວນ**

ແມ່ນເຂດ ..... ຊຶ່ງຢູ່ເບື້ອງທິດ ..... ມີເນື້ອທີ່ປະມານ .....ເຂດນີ້ແມ່ນເຂດທີ່ສະຫງວນ ເອົາໄວ້ສຳລັບພັດທະນາກິດຈະກຳໃດຫນຶ່ງສະເພາະໃນຕໍ່ຫນ້າ. ໃນເຂດນີ້ແມ່ນສາ ມາດປັບປຸງ ແລະ ກໍ່ສ້າງສິ່ງອຳນວຍຄວາມ ສະດວກໄດ້ ແຕ່ຕ້ອງໄດ້ມີການອອກແບບໃຫ້ກົມກືນ ກັບສະພາບແວດລ້ອມ ແລະ ທຳມະຊາດຂອງຖ້ຳຈອມອອງ. ໃນພື້ນ ທີ່ເຂດສະຫງວນປະກອບມີ.....ເຂດ ຊຶ່ງມີເນື້ອທີ່ລວມແມ່ນ .....ເຮັກຕາ.

- **ເຂດບໍລິການ**

ແມ່ນເຂດທີ່ສາມາດປຸກສ້າງສິ່ງອຳນວຍຄວາມສະດວກດ້ານຕ່າງໆໄດ້ ແຕ່ການອອກແບບສິ່ງປຸກ ສ້າງໃນເຂດດັ່ງກ່າວ ຕ້ອງສ່ອງແສງໃຫ້ເຫັນເຖິງວັດທະນະທຳຊົນເຜົ່າຂອງທ້ອງຖິ່ນ ແລະ ມີຄວາມກົມກືນກັບທາງທຳມະຊາດ . ນອກນີ້, ກໍ ຕ້ອງຫຼີກລ້ຽງການທຳລາຍສິ່ງແວດລ້ອມໃນເຂດດັ່ງກ່າວໃຫ້ຫນ້ອຍທີ່ສຸດ. ສຳລັບເຂດບໍລິການຢູ່ບໍລິເວນຖ້ຳຈອມອອງໄດ້ ແບ່ງ ອອກເປັນ 2 ເຂດ ສຳລັບເນື້ອທີ່ຂອງແຕ່ລະເຂດ ແລະ ການກຳນົດສິ່ງປຸກສ້າງແມ່ນມີລະອຽດດັ່ງນີ້:

  - **ເຂດບໍລິການທີ 1**

ເຂດບໍລິການທີ 1 ແມ່ນພື້ນທີ່ສີ .....ມີເນື້ອທີ່ທັງຫມົດ .....ຮຕ. ໃນນີ້ເຂດນີ້ປະກອບມີ: ລານຈອດລົດ, ຫ້ອງນ້ຳສາທາລະນະ, ຮ້ານຂາຍເຄື່ອງທີລະນຶກ, ເສັ້ນທາງຍ່າງພາຍໃນເຂດບໍລິການ, ແລະ ຈຸດນັ່ງພັກຜ່ອນ /ບ່ອນນັ່ງກິນ ອາຫານເຄື່ອງດື່ມ.

ແຜນທີ່ເຂດບໍລິການທີ 1

  - **ເຂດບໍລິການທີ 2:**

ໃນພື້ນທີ່ເຂດນີ້ປະກອບດ້ວຍບ່ອນຂາຍປີ້/ຈຸດເກັບຄ່າທຳນຽມ, ປະຕູໂຂງທາງເຂົ້າ, ຈຸດນັ່ງພັກຜ່ອນ, ຮ້ານ ຂາຍເຄື່ອງດື່ມ, ສາລາພັກຜ່ອນຕາມແຄມນ້ຳ, ເສັ້ນທາງຍ່າງ, ຫ້ອງນ້ຳສາທາລະນະ, ກະດານຂໍ້ມູນຂ່າວສານ/ກະດານແຜນທີ່, ຂັ້ນໄດຂຶ້ນຖ້ຳ, ແລະ ຂົວແຂນສະລີງຂ້າມນ້ຳ.

ແຜນທີ່ເຂດບໍລິການທີ 2

3. ການກຳນົດກິດຈະກຳການທ່ອງທ່ຽວ

3.1 ກິດຈະກຳພາຍໃນແຫລ່ງທ່ອງທ່ຽວ

ຖ້ຳຈອມອອງ ເປັນແຫ່ງທ່ອງທ່ຽວທາງທຳມະຊາດທີ່ມີຄວາມສວຍງາມ ມີຄວາມຍາວ 15 ກມ, ເປັນແຫ່ງທ່ອງທ່ຽວເປົ້າໝາຍໃນການພັດທະນາການທ່ອງທ່ຽວຂອງເມືອງໄຊ ກໍຄື ແຂວງອຸດົມໄຊ. ປັດຈຸບັນ ກິດຈະກຳການທ່ອງທ່ຽວຍັງ ບໍ່ທັນຫຼາກຫຼາຍ ແລະ ຍັງບໍ່ທັນໄດ້ຮັບການປັບປຸງເທົ່າທີ່ຄວນ . ເພື່ອດຶງດູດນັກທ່ອງທ່ຽວຈາກພາຍໃນ ແລະ ຕ່າງປະເທດ ເຂົ້າມາທ່ຽວຊົມຫຼາຍຂຶ້ນ ຈຶ່ງຄວນມີກິດຈະກຳການທ່ອງທ່ຽວດ້ວຍຫຼາຍຮູບແບບ ດັ່ງນີ້:

- ການທ່ຽວຊົມພາຍໃນຖ້ຳຈອມອອງ
- ການຕັ້ງແຄ້ມ ແລະ ການກິນເຂົ້າປ່າ (ສາມາດຈັດຢູ່ເຂດບໍລິການທີ 2 ແລະ ເຂດສະຫງວນ)
- ການຍ່າງປ່າທ່ຽວຊົມທິວທັດທຳມະຊາດບໍລິເວນອ້ອມຮອບຖ້ຳ
- ການທ່ອງທ່ຽວເພື່ອການສຶກສາດ້ານຕ່າງໆພາຍໃນຖ້ຳ

- **ຂໍ້ແນະນຳ :**

ກິດຈະກຳການທ່ຽວຊົມພາຍໃນຖ້ຳແມ່ນກິດຈະກຳຕົ້ນຕໍຂອງການທ່ອງທ່ຽວຢູ່ຖ້ຳຈອມອອງ ດັ່ງນັ້ນເພື່ອ ເຮັດໃຫ້ນັກທ່ອງທ່ຽວໄດ້ເຫັນຄວາມສວຍງາມທີ່ເປັນທຳມະຊາດແທ້ໆພາຍໃນຖ້ຳ ແມ່ນມີຄວາມຈຳເປັນຕ້ອງໄດ້ຕິດຕັ້ງໄຟຟ້າ ແລະ ໃສ່ດອກໄຟເຍືອງພາຍໃນຖ້ຳ. ໃນນີ້, ກໍຕ້ອງໄດ້ເນັ້ນແສງສະຫວ່າງຢູ່ຕາມຈຸດມີຫີນງອກ ຫຼື ຫີນຍ້ອຍທີ່ເດັ່ນໆ ເພື່ອໃຫ້ ນັກທ່ອງທ່ຽວໄດ້ເຫັນຄວາມສວຍງາມຂອງທຳມະຊາດ ແລະ ທັງໄດ້ຖ່າຍຮູບ . ສຳລັບດອກໄຟທີ່ນຳໄປຕິດຕັ້ງຢູ່ພາຍໃນຖ້ຳ ນັ້ນ ຕ້ອງແມ່ນດອກໄຟທີ່ໃຊ້ພາຍໃນຖ້ຳສະເພາະ ຍ້ອນວ່າແສງສະຫວ່າງຂອງດອກໄຟທີ່ໃຊ້ສະເພາະພາຍໃນຖ້ຳນັ້ນ ມັນບໍ່ ທັນລາຍສິ່ງແວດລ້ອມ ບໍ່ເຮັດໃຫ້ຫີນເປັນໄຄ ແລະ ບໍ່ເຮັດໃຫ້ຄວາມເຫຼືອມຂອງຫີນສູນຫາຍໄປ.

ຕົວຢ່າງຮູບພາບປັດຈຸບັນ




ຕົວຢ່າງຮູບພາບທີ່ໃສ່ດອກໄຟພາຍໃນຖ້ຳແລ້ວ (ຖ້ຳທອງລໍ ແຂວງຄຳມ່ວນ)

3.1 ກຳນົດກິດຈະກຳພາຍນອກແຫ່ງທ່ອງທ່ຽວ

ພື້ນທີ່ແຫຼ່ງທ່ອງທ່ຽວຖ້ຳຈອງອອງ ນອນໃນເຂດພື້ນທີ່ບ້ານຈອມອອງ ປະຊາຊົນສ່ວນຫຼາຍແມ່ນ ເຜົ່າກືມມຸ. ເພື່ອເຮັດໃຫ້ປະຊາຊົນບ້ານຈອມອອງ ແລະ ບ້ານອື່ນໆເຂົ້າໄດ້ມີສ່ວນຮ່ວມໃນ ການ ພັດທະນາແຫຼ່ງທ່ອງທ່ຽວທຳມະຊາດຖ້ຳຈອມອອງ ແລະ ບໍລິເວນໃກ້ຄຽງ ມີຄວາມຈຳເປັນຕ້ອງໄດ້ ພັດທະນາກິດຈະກຳອື່ນໆຕື່ມອີກຢູ່ພາຍນອກແຫຼ່ງທ່ອງທ່ຽວ ເຊັ່ນ:

- ກິດຈະກຳການຂີ່ລົດຖີບທ່ຽວຊົມທຳມະຊາດ ແລະ ວັດທະນະທຳທ້ອງຖິ່ນ;
- ການຍ່າງປ່າຈາກບ້ານຈອມອອງ ເຂົ້າຫາຖ້ຳຈອມອອງ;
- ການທ່ຽວຊົມວິຖີຊີວິດຂອງປະຊາຊົນບ້ານໃກ້ຄຽງ;
- ການຈັດບຸນປະເພນີປະຈຳປີ (ບຸນເຕດນີ້ມ, ຟັງຂັບລຳຂອງຊົນເຜົ່າ)
- ການທ່ຽວຊົມຖ້ຳຢູ່ບ້ານນ້ຳປຸ (ຖ້ຳຢາຄົ້ວ, ຖ້ຳປູອງ, ແລະ ຖ້ຳຍະແສງ)
- ການທ່ຽວຊົມການຜະລິດເຄື່ອງຫັດຖະກຳຊາວບ້ານ (ການຖັກແສ່ວເຄື່ອງນຸ່ງຮົ່ມ ແລະ ເຄື່ອງໃຊ້ສອຍຂອງຊົນເຜົ່າກືມມຸ ເຊັ່ນ: ສານຖົງປຸງດ).

4. ແຜນງານ, ໂຄງການພັດທະນາການທ່ອງທ່ຽວ

- **ແຜນງານທີ 1: ການປັບປຸງເສັ້ນທາງລົດ ແລະ ພັດທະນາໂຄງລ່າງທີ່ຕິດພັນກັບການທ່ອງທ່ຽວ.**
  - **ໂຄງການທີ 1:** ໂຄງການປັບປຸງເສັ້ນທາງແຕ່ບ້ານນາສ້າວ - ບ້ານຈອມອອງ, ໄລຍະ 45 ກິໂລແມັດ
  - **ໂຄງການທີ 2:** ໂຄງການປັບປຸງເສັ້ນທາງແຕ່ບ້ານຈອມອອງ - ເສັ້ນທາງຫລັກ 24 ເລກທີ 13 ເໜືອ, ໄລຍະ ທາງ 18 ກິໂລແມັດ.

ໂຄງການເຫລົ່ານີ້ ແມ່ນມີຄວາມຈຳເປັນ ແລະ ຮີບດ່ວນໃນການປັບປຸງເສັ້ນທາງໄປຫາບ້ານຈອມອອງ. ເພາະວ່າຕາມເສັ້ນທາງດັ່ງກ່າວມີແຫລ່ງທ່ອງທ່ຽວທີ່ສວຍງາມຫລາຍແຫ່ງທີ່ສາມາດສ້າງເປັນລາຍການທ່ອງທ່ຽວ, ຈຸດ ແວ່ພັກເຊົາ ແລະ ຈຸດຊົມວິວທິວທັດທຳມະຊາດ. ໂດຍສະເພາະບ້ານຈອມອອງ ແມ່ນບ້ານທີ່ມີທ່າແຮງການທ່ອງທ່ຽວ ຫຼາຍດ້ານ ຊຶ່ງຈະຊ່ວຍເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມຂອງເມືອງໄຊນັບມື້ນັບດີຂຶ້ນເປັນກ້າວໆ. ຫາກ ເສັ້ນທາງໄດ້ຮັບການປັບປຸງ ແລະ ມີຄວາມສະດວກສະບາຍກໍ່ຍິ່ງເຮັດໃຫ້ນັກທ່ອງທ່ຽວຢາກເຂົ້າມາທ່ຽວບ້ານຈອມ ອອງ ໂດຍສະເພາະຖ້ຳຈອມອອງເພີ່ມຂຶ້ນ. ສະນັ້ນ, ພາກສ່ວນກ່ຽວຂ້ອງຕ່າງໆຕ້ອງໄດ້ເອົາໃຈໃສ່ເປັນເຈົ້າການໃນການ ຊອກຫາແຫຼ່ງທຶນ ເພື່ອມາສຸມໃສ່ໃນການປັບປຸງເສັ້ນທາງໃນເມືອງໄຊໃຫ້ສຳເລັດ ເພື່ອຄວາມສວຍງາມ, ສະດວກ ແລະ ສ້າງຄວາມປະທັບໃຈໃຫ້ນັກທ່ອງທ່ຽວ.

  - **ໂຄງການທີ 5:** ໂຄງການປັບປຸງເສັ້ນທາງແຕ່ທາງແຍກເຂົ້າຫາຖ້ຳລະຫວ່າງ ບ້ານຈອມອອງ ເຂົ້າຫາຖ້ຳ ໄລຍະ ທາງ 2,5 ກິໂລແມັດ.

ໂຄງການນີ້ ແມ່ນເປັນໂຄງການບູລິມະສິດທີ່ສຳຄັນເນື່ອງຈາກວ່າເສັ້ນທາງນີ້ ເປັນເສັ້ນທາງເຂົ້າຫາຖ້ຳຈອມ ອອງໂດຍກົງ ຊຶ່ງເປັນທາງທີ່ຈະທະລຸໃຫມ່ ຊຶ່ງໄດ້ຖືກສຳຫລວດແລ້ວໂດຍພະແນກຍທຂແຂວງ. ສະນັ້ນ, ຄວນໄດ້ມີ ການປັບປຸງຮີບດ່ວນເພື່ອອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຊົມຖ້ຳ.

  - **ໂຄງການທີ 6:** ໂຄງການດຶງຕາຄ່າຍລະບົບໄຟຟ້າເຂົ້າຫາຖ້ຳຈອມອອງ.

ປັດຈຸບັນ, ການນຳໃຊ້ລະບົບໄຟຟ້າພາຍໃນຖ້ຳ ມີພຽງແຕ່ລະບົບພະລັງງານໄຟຟ້າແສງອາທິດເທົ່ານັ້ນ ຈຶ່ງມີ ຄວາມຫຍຸ້ງຍາກໃນກໍລະນີລະດູຝົນ, ບໍ່ມີແສງແດດ ເຮັດໃຫ້ແສງສະຫວ່າງບໍ່ພຽງພໍ ແລະ ເກີດອັນຕະລາຍເວລາເຂົ້າ ໄປໃນຖ້ຳ. ຖ້າຫາກມີລະບົບໄຟຟ້າ ກໍ່ຈະເຮັດໃຫ້ນັກທ່ອງທ່ຽວເຫັນໄດ້ຄວາມສວຍສົດງົດງາມພາຍໃນຖ້ຳ ແລະ ມີ

ຄວາມປອດໄພ ແຕ່ການໃຊ້ແສງສະຫວ່າງພາຍໃນຖ້ຳຄວນຄຳນຶງເຖິງດອກໄຟທີ່ໃຊ້ພາຍໃນຖ້ຳສະເພາະ ແລະ ບໍ່ທຳລາຍສິ່ງແວດລ້ອມພາຍໃນຖ້ຳ.

- **ໂຄງການທີ 7**: ໂຄງການສ້າງລະບົບນ້ຳໃຊ້ຢູ່ບໍລິເວນຖ້ຳຈອມອອງ.

ການສ້າງລະບົບນ້ຳໃຊ້ ເປັນສິ່ງຈຳເປັນທີ່ຕ້ອງໄດ້ຈັດຕັ້ງປະຕິບັດ ບໍ່ວ່າຈະເປັນລະບົບນ້ຳລິນ ຫລື ນ້ຳບາດານ ເພື່ອເປັນການຕອບສະໜອງໃຫ້ແກ່ການບໍລິການການທ່ອງທ່ຽວ ຖ້າຫາກມີການສ້າງຮ້ານອາຫານ ຫລື ຫ້ອງນ້ຳສາທາລະນະ.

- **ໂຄງການທີ 8:** ໂຄງການສ້າງຈຸດຊົມວິວຕາມເສັ້ນທາງລະຫວ່າງບ້ານຈອມອອງ - ບ້ານກົ່ວຈະລຸ.

ເພື່ອເຮັດໃຫ້ນັກທ່ອງທ່ຽວມີຄວາມປະທັບໃຈ ແລະ ສຳພັດກັບທັດສະນີຍະພາບຂອງແຂວງອຸດົມໄຊ ຈຸດຊົມວິວຈຶ່ງເປັນອີກທາງເລືອກໜຶ່ງໃຫ້ແກ່ນັກທ່ອງທ່ຽວໄດ້ແວ່ພັກເຊົາໃນລະຫວ່າງການເດີນທາງ.

- **ແຜນງານທີ 2: ການປັບປຸງ ແລະ ພັດທະນາເສັ້ນທາງຍ່າງຕາມສະຖານທີ່ທ່ອງທ່ຽວ**
  - **ໂຄງການທີ 1:** ໂຄງການປັບປຸງເສັ້ນທາງຍ່າງແຕ່ບ້ານຈອມອອງຫາຖ້ຳຈອມອອງ.
  - **ໂຄງການທີ 2:** ໂຄງການສຳຫລວດ ແລະ ສ້າງວົງຈອນເສັ້ນທາງຍ່າງປ່າເຂດບໍລິເວນຖ້ຳຈອມອອງ.

ໂຄງການນີ້ແມ່ນເປັນໂຄງການໜຶ່ງທີ່ສຳຄັນ ຊຶ່ງສາມາດສ້າງກິດຈະກຳການທ່ອງທ່ຽວໃຫ້ມີຄວາມຫລາກຫລາຍ ເພື່ອໃຫ້ນັກທ່ອງທ່ຽວມີທາງເລືອກຫລາຍຂຶ້ນກວ່າເກົ່າ ແລະ ສ້າງຄວາມປະທັບໃຈໃຫ້ນັກທ່ອງທ່ຽວ.

- **ແຜນງານທີ 3: ການປັບປຸງ ແລະ ພັດທະນາໂຄງລ່າງພາຍໃນແຫຼ່ງທ່ອງທ່ຽວ**
  - **ໂຄງການທີ 1:** ໂຄງການສຳຫຼວດ, ອອກແບບ, ຈັດສັນ ແລະ ກໍ່ສ້າງສິ່ງອຳນວຍຄວາມສະດວກ ພາຍໃນແຫຼ່ງທ່ອງທ່ຽວ.

ການສຳຫຼວດ ແລະ ການອອກແບບໂຄງລ່າງພື້ນຖານພາຍໃນແຫຼ່ງທ່ອງທ່ຽວ ແມ່ນເພື່ອໃຫ້ໂຄງ ລ່າງດັ່ງກ່າວ ມີຄວາມກົມກືນກັບສິ່ງແວດລ້ອມ.

- ອອກແບບສິ່ງອຳນວຍຄວາມສະດວກປະກອບມີ: ເສັ້ນທາງຍ່າງຢູ່ບໍລິເວນຖ້ຳ, ທາງຍ່າງຂຶ້ນ-ລົງຖ້ຳ, ຂັ້ນໄດຂຶ້ນ-ລົງພາຍໃນຖ້ຳ,ເສັ້ນທາງຍ່າງພາຍໃນຖ້ຳ, ຈຸດຊົມວິວ ແລະ ຈຸດຖ່າຍຮູບ.
- ເຂດຂາຍເຄື່ອງທີ່ລະນຶກສຳລັບຊາວບ້ານ.
- ສຳຫຼວດເສັ້ນທາງຂີ່ລົດຖີບຂອງນັກທ່ອງທ່ຽວ
- ສຳຫຼວດບ່ອນຕິດຕັ້ງປ້າຍຊີ້ບອກຕາມຈຸດຕ່າງໆທີ່ເໝາະສົມ
- ກຳນົດຈຸດແວ່ເຊົາ ແລະ ມີສາລາ ຫຼື ບ່ອນນັ່ງພັກຜ່ອນໃຫ້ນັກທ່ອງທ່ຽວ.
- ສ້າງບ່ອນວາງກະຕ່າ ຫຼື ບ່ອນຖິ້ມຂີ້ເຫຍື້ອຕາມຈຸດທາງຍ່າງ.

  - **ໂຄງການທີ 2:** ໂຄງການພັດທະນາສິ່ງອຳນວຍຄວາມສະດວກພາຍໃນແຫລ່ງທ່ອງທ່ຽວ
    - ສ້າງປະຕູໂຂງທາງເຂົ້າຖ້ຳຈອມອອງ ແລະ ຮົ້ວອ້ອມບໍລິເວນຖ້ຳ.
    - ສະຖານທີ່ຈອດລົດໃຫ່ຍ/ລົດຈັກ.
    - ປັບປຸງໜ້າດິນຢູ່ເຂດບໍລິການທີ 1 ແລະ ທີ 2.
    - ຮ້ານຂາຍເຄື່ອງທີ່ລະນຶກ (ເພື່ອສົ່ງເສີມສີໄມ້ລາຍມືຂອງປະຊາຊົນໃນເຂດດັ່ງກ່າວ ໂດຍສະເພາະເຄື່ອງຫັດຖະກຳ ເຊັ່ນ : ເຄື່ອງນຸ່ງຊົນເຜົ່າ, ຖົງປຽດ ແລະ ເຄື່ອງຈັກສານ).

- ຮ້ານອາຫານ, ຮ້ານຂາຍເຄື່ອງດື່ມ. (ຮ້ານບໍລິການອາຫານ ແລະ ເຄື່ອງດື່ມຕ່າງໆ ຄວນບໍລິການຢູ່ເຂດ ບໍລິການທີ 1. ສຳລັບເຂດບໍລິການທີ 2 ແມ່ນໃຫ້ບໍລິການພຽງແຕ່ປະເພດເຄື່ອງດື່ມເບົາ ແລະ ກາເຟເທົ່ານັ້ນ).
- ສ້າງກະດານຂໍ້ມູນຂ່າວສານ ແລະ ແຜນທີ່ຈຳລອງຖ້ຳຈອມອອງ (ເຂດບໍລິການ 2)
- ທາງຍ່າງຂຶ້ນ-ລົງຖ້ຳ, ຂັ້ນໄດ, ເສັ້ນທາງຍ່າງ ແລະ ຮາວຈັບພາຍໃນຖ້ຳ (ສິ່ງກໍ່ສ້າງພາຍໃນຖ້ຳຕ້ອງໃຫ້ກົມກືນກັບສິ່ງແວດລ້ອມພາຍໃນຖ້ຳ)
- ຂົວແຂວນສະລິງຢູ່ເຂດບໍລິການທີ 2 ຂ້າມໄປຫາເຂດຂະຫຍາຍ.
- ຈຸດຖ່າຍຮູບຢູ່ເຂດບໍລິເວນປາກເຂົ້າຖ້ຳ.
- ຫ້ອງນ້ຳສາທາລະນະ (ເຂດບໍລິການທີ 1 ແລະ ທີ 2).
- ສ້າງປ້າຍຊີ້ບອກເຂົ້າເຖິງແຫລ່ງທ່ອງທ່ຽວ, ປ້າຍບອກພາຍໃນແຫລ່ງທ່ອງທ່ຽວ / ປ້າຍເຕືອນອັນຕະລາຍຕ່າງໆ. (ການຜະລິດປ້າຍຊີ້ບອກ ແລະ ໂຄສະນາແມ່ນມີຄວາມຈຳເປັນ. ດັ່ງນັ້ນ, ທຸກໆຈຸດໃນວົງຈອນການທ່ອງທ່ຽວທີ່ນັກທ່ອງທ່ຽວໄປເຖິງ ຄວນມີປ້າຍອະທິບາຍຄວາມໝາຍ ເພື່ອສື່ສານໃຫ້ເຂົາເຈົ້າໄດ້ເຂົ້າໃຈເຖິງປະຫວັດຄວາມເປັນມາ. ນອກຈາກນີ້, ຍັງເປັນການຊີ້ບອກເສັ້ນທາງ ແລະ ປ້າຍເຕືອນໄພຕ່າງໆ ໃຫ້ແກ່ນັກທ່ອງທ່ຽວ)

ແນວຄວາມຄິດໃນການອອກແບບໂຄງລ່າງພື້ນຖານພາຍໃນແຫ່ງທ່ອງທ່ຽວອ່າງນ້ຳຕຽນ

ບ້ານ ຈອມອອງ
CHOM ONG VILLAGE



ถ้ำจอมออง
CHOM ONG CAVE

- **ແຜນງານທີ 4 : ການປັບປຸງ ແລະ ພັດທະນາຜະລິດຕະພັນການທ່ອງທ່ຽວ.**
  - **ໂຄງການທີ 1:** ໂຄງການສ້າງວົງຈອນການທ່ອງທ່ຽວເຊື່ອມຕໍ່ລະຫວ່າງບ້ານຫາບ້ານ.

    ການສ້າງວົງຈອນການທ່ອງທ່ຽວເຊື່ອມຕໍ່ລະບ້ານຫາບ້ານ ແມ່ນເພື່ອເປັນການລາຍການທ່ອງທ່ຽວໃຫ້ມີຄວາມຫຼາກຫຼາຍ ແລະ ດຶງດູດນັກທ່ອງທ່ຽວໃຫ້ເຂົ້າມາທ່ຽວເມືອງໄຊນັບມື້ນັບເພີ້ມຂຶ້ນກວ່າເກົ່າ.
  - **ໂຄງການທີ 2:** ໂຄງການປັບປຸງເຮືອນພັກແຂມລວມບ້ານຈອມອອງ.

    ເນື່ອງຈາກວ່າມີຈຳນວນນັກທ່ອງທ່ຽວທີ່ເຂົ້າມາທ່ອງທ່ຽວບ້ານຈອມອອງມີຄວາມຕ້ອງການຢາກຢ້ຽມຊົມວິຖີຊີວິດຂອງປະຊາຊົນນັບມື້ນັບເພີ່ມຂຶ້ນ ແລະ ຄວາມຕ້ອງການທາງດ້ານສະຖານທີ່ພັກເຊົາເພື່ອຮອງຮັບນັກທ່ອງທ່ຽວກໍເພີ່ມຂຶ້ນຈຶ່ງຕ້ອງໄດ້ມີການປັບປຸງ ແລະ ພັດທະນາສະຖານທີ່ພັກເຊົາ ເຊັ່ນ : ເຮືອນພັກແຂມລວມ, ເຮືອນພັກ, ຣີສອດ ແລະ ເຮືອນພັກຂອງປະຊາຊົນຫຼື Homestay. ສຳລັບສະຖານທີ່ພັກເຊົາທີ່ຄວນປັບປຸງແມ່ນເຮືອນພັກແຂມລວມຂອງປະຊາຊົນ ຊຶ່ງຕ້ອງມີການປັບປຸງສິ່ງອຳນວຍຄວາມສະດວກ ແລະ ປະກອບອຸປະກອນທີ່ຈຳເປັນຈຳນວນຫນຶ່ງ ເຊັ່ນ: ຫ້ອງນ້ຳ, ເຄື່ອງບ່ອນນອນຄົບຊຸດ ແລະ ອຸປະກອນ ການປຸງແຕ່ງ ແລະ ບໍລິການນັກທ່ອງທ່ຽວ.
  - **ໂຄງການທີ 3:** ການສ້າງຜະລິດຕະພັນເຄືອຂ່າຍ ແລະ ສະໜອງຜະລິດຕະພັນການທ່ອງທ່ຽວ

ແມ່ນໃຫ້ປັບປຸງຜະລິດຕະພັນທີ່ມີແລ້ວເຊັ່ນ: ຫັດຖະກຳຕ່ຳຫູກເຄື່ອງນຸ່ງຫົ່ມຊິ້ນເຜົ່າ, ແຜ່ນແພ, ຖັກຖີ່ງ ປຽດ, ຜະລິດເຫລົ້າໄຫ. ນອກນັ້ນຕ້ອງໄດ້ຄົ້ນຄ້ວາໃນການແປຮູບສ້າງຜະລິດຕະພັນໃຫ້ມີຄວາມຫລາກຫລາຍ ຕອບສະໜອງກັບຄວາມຕ້ອງການຂອງຕະຫລາດ.

- **ໂຄງການທີ 4:** ໂຄງການສົ່ງເສີມການປູກພືດກະສິກຳປອດສານພິດ.

ເປັນການຊຸກຍູ້ສົ່ງເສີມໃຫ້ປະຊາຊົນ ໃນການປູກພືດກະສິກຳປອດສານຜິດ ເພື່ອຈຳໜ່າຍພືດ ປອດສານພິດອອກສູ່ຕະຫລາດ, ຈຳໜ່າຍໃຫ້ຮ້ານອາຫານ ແລະ ປຸງ ແຕ່ງໃຫ້ນັກທ່ອງທ່ຽວທີ່ເດີນທາງເຂົ້າມາ ທ່ຽວຊົມຖ້ຳ ທັງເປັນການໂຄສະນາ ແລະ ດຶງດູດນັກທ່ອງທ່ຽວເພີ້ມຂຶ້ນ.

- **ໂຄງການທີ 5:** ໂຄງການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນກ່ຽວກັບການພັດທະນາ ຜະລິດຕະພັນການທ່ອງທ່ຽວ.

ການສົ່ງເສີມຜະລິດຕະພັນການທ່ອງທ່ຽວ ມີຄວາມຮຽກຮ້ອງຕ້ອງໄດ້ມີການຮ່ວມມື ແລະ ເປີດກວ້າງກັບ ພາກທຸລະກິດ ເພື່ອເຮັດໃຫ້ບັນດາຫ້ອໜ່ວຍທຸລະກິດພາຍໃນແຂວງເວົ້າສະເພາະ ແລະ ບັນດາແຂວງຕ່າງໆ ເວົ້າ ລວມ ໃຫ້ຊົມໃຊ້ຜະລິດຕະພັນຂອງບ້ານຈອມອອງ ພ້ອມທັງຮ່ວມມືກັນລະຫວ່າງພາກລັດ ແລະ ເອກະຊົນໃນ ການໂຄສະນາສົ່ງເສີມຜະລິດຕະພັນດັ່ງກ່າວ.

- **ແຜນງານທີ 5: ການພັດທະນາບຸກຄະລາກອນ**

- **ໂຄງການທີ 1**: ໂຄງການປູກຈິດສຳນຶກດ້ານການທ່ອງທ່ຽວ ແລະ ການມີສ່ວນຮ່ວມຂອງປະຊາຊົນ ໃນທ້ອງຖິ່ນ.

  - ການຝຶກອົບຮົມປູກຈິດສຳນຶກດ້ານການທ່ອງທ່ຽວໃຫ້ປະຊາຊົນທ້ອງຖິ່ນ
  - ການປູກຈິດສຳນຶກດ້ານການທ່ອງທ່ຽວໃຫ້ອຳນາດການປົກຄອງຂັ້ນບ້ານ ແລະ ປະຊາຊົນເພື່ອ ໃຫ້ປະຊາຊົນ ໃນບ້ານທີ່ໃກ້ຄຽງມີຄວາມເຂົ້າໃຈ ກ່ຽວກັບວຽກງານການທ່ອງທ່ຽວເຊັ່ນ: ການມີສ່ວນຮ່ວມໃນການບໍລິການເຊັ່ນ: ພະນັກງານນຳທ່ຽວຂັ້ນບ້ານ ການຈັດຕັ້ງກຸ່ມຕ່າງໆຕະຫຼອດ ເຖິງຜົນໄດ້ຮັບທີ່ປະຊາຊົນຈະໄດ້ຮັບນັບທັງທາງກົງ ແລະ ທາງອ້ອມ.

- **ໂຄງການທີ2**: ການຈັດທັດສະນະສຶກສາຖອດຖອນບົດຮຽນ

  - ຈັດທັດສະນະສຶກສາໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງຂັ້ນບ້ານໄດ້ໄປ ຖອດຖອນ ບົດຮຽນ ແລະ ແນວຄວາມຄິດໃນການສ້າງກົດຈະກຳການທ່ອງທ່ຽວຢູ່ກັບແຫຼ່ງທ່ອງທ່ຽວ ພາຍໃນແຂວງ ຫຼື ແຂວງ ໃກ້ຄຽງທີ່ມີຊັບພະຍາກອນໃນລັກສະນະຄຽງກັນຫຼືໃກ້ຄຽງ ເພື່ອໃຫ້ເຂົາເຈົ້າ ໄດ້ມີບົດຮຽນໃນການພັດທະນາ ການທ່ອງທ່ຽວ.

- **ໂຄງການທີ 3:** ຝຶກອົບຮົມການບໍລິການທ່ອງທ່ຽວ

  - ການຝຶກອົບຮົມດ້ານການບໍລິການການທ່ອງທ່ຽວ (ພະນັກງານນຳທ່ຽວຂັ້ນບ້ານ, ການຕ້ອນ ຮັບ, ການ ບໍລິການເຮືອນພັກແຮມ, ການປຸງແຕ່ງອາຫານ, ການຄຸ້ມຄອງແຫລ່ງທ່ອງທ່ຽວ ແລະ ການບໍລິການດ້ານອື່ນໆ).

- **ໂຄງການທີ 4:** ຝຶກອົບຮົມການແປຮູບຜະລິດຕະພັນເຄື່ອງຂອງທີ່ລະນຶກ

  - ການຝຶກອົບຮົມການຜະລິດເຄື່ອງທີ່ລະນຶກຈາກຫັດຖະກຳຕ່ຳຫູກ, ຜ້າຝ້າຍ, ເຄື່ອງຈັກສານ ແລະ ການໃສ່ ເຄື່ອງຫມາຍການຜະລິດຂອງຊາວບ້ານ.

- **ແຜນງານທີ 6: ການໂຄສະນາ**

- **ໂຄງການທີ 1:** ສ້າງແຜນທີ່ແຫຼ່ງທ່ອງທ່ຽວຖ້ຳຈອມອອງ

- ແຫຼ່ງທ່ອງທ່ຽວຖ້ຳຈອມອອງມີເນື້ອທີ່ກ້ວາງຂວາງ, ຄວນມີການສ້າງແຜນທີ່ສະເພາະຂອງແຫຼ່ງ ທ່ອງທ່ຽວ ແລະ ແນະນຳຈຸດຕ່າງໆພາຍໃນແຫຼ່ງທ່ອງທ່ຽວໃຫ້ແຂກໄປທ່ຽວຊົມ ແລະ ຮັບຮູ້ຂໍ້ມູນ. ກ່ອນຈະໄປເຖິງແຫຼ່ງທ່ອງທ່ຽວກະດານ ດັ່ງກ່າວຄວນຈະຕັ້ງຢູ່ເຂດບໍລິການທີ 2 ກ່ອນຂຶ້ນຖ້ຳ.

o **ໂຄງການທີ 2:** ໂຄສະນາປະຊາສຳພັນ

- ຂະແໜງການທ່ອງທ່ຽວແຂວງອຸດົມໄຊ ຜະລິດສິ່ງພິມໂຄສະນາ, ໂຄສະນາຕາມສື່ຕ່າງໆຄື: ວິທະຍຸ, ໜັງ ສືພິມ, ວາລະສານ, ໂທລະພາບ. ເອົາຂໍ້ມູນລົງໃນເວັບໄຊການທ່ອງທ່ຽວຂອງແຂວງ, ສູນກາງ ແລະ ເວັບໄຊ ໂຄສະນາການທ່ອງທ່ຽວອື່ນໆ. ນອກຈາກນັ້ນ, ກ່ໂຄສະນາເຂົ້າໃນລາຍການທ່ອງທ່ຽວຂອງບໍລິສັດ, ຂຽນບົດ ຄວາມເຂົ້າໃນວາລະສານ ແລະ ຈັດ FAMTRIP ໃຫ້ສື່ມວນຊົນຕ່າງໆເພື່ອໃຫ້ນັກທ່ອງທ່ຽວໄດ້ຮັບຮູ້ແຫຼ່ງທ່ອງ ທ່ຽວດັ່ງກ່າວນັບມື້ເພີ່ມຂຶ້ນ.

- ການປະຊາສຳພັນ ເຊັ່ນ: ການຈັດຄາລາວານທ່ອງທ່ຽວແຕ່ເທດສະບານເມືອງໄຊຫາຖ້ຳຈອມອອງ.

- ສ້າງເອກະສານໂຄສະນາທັງພາສາລາວ, ພາສາໄທ ແລະ ພາສາຕ່າງປະເທດ ໃຫ້ເອົາໃຈໃສ່ທັງຕະຫຼາດພາຍ ໃນ ແລະ ຕ່າງປະເທດບໍ່ຄວນຖືເບົາຕະຫຼາດພາຍໃນ.

5. ຜູ້ມີສ່ວນຮ່ວມໃນການພັດທະນາ

ພາກສ່ວນທີ່ກ່ຽວຂ້ອງຫຼືຜູ້ ທີ່ມີສ່ວນຮ່ວມ	**ວຽກງານພັດທະນາແລະສິ່ງເສີມ ການທ່ອງທ່ຽວ**	**ຜົນປະໂຫຍດທີ່ຈະໄດ້ຮັບ**
- ຂະແໜງຖະແຫລງ ຂ່າວ , ວັດທະນະທຳ ແລະ ທ່ອງທ່ຽວ. - ຂະແໜງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດ ລ້ອມ, ພະແນກອຸດສາຫະ ກຳ ແລະ ການຄ້າແຂວງ ອຸດົມໄຊ	- ພັດທະນາແລະຄຸ້ມຄອງຖ້ຳຈອມອອງ ໃຫ້ເປັນແຫຼ່ງທ່ອງທ່ຽວແບບຍືນຍົງ. - ຊ່ວຍທ້ອງຖິ່ນພັດທະນາກິດຈະກຳພາຍ ໃນຖ້ຳຈອມອອງຕາມພາລະບົດບາດຂອງ ຂະແໜງການ - ສ້າງທັກສະ ແລະ ພັດທະນາບຸກຄະລາ ກອນໃນການບໍລິການການທ່ອງທ່ຽວ. - ພັດທະນາເຄືອຄ່າຍຜະລິດຕະພັນ ການທ່ອງທ່ຽວ, ນຳໃຊ້ທ່າແຮງດ້ານກະສິ ກຳ ແລະ ຫັດຖະກຳ	- ເຮັດໃຫ້ນັກທ່ອງທ່ຽວທັງພາຍໃນ ແລະຕ່າງປະເທດເຂົ້າມາທ່ຽວຊົມ ຫຼາຍຂຶ້ນ. - ຖ້ຳຈອມອອງຖືກຮັກສາໃຫ້ມີຄວາມຍືນ ຍົງ,ເພື່ອເປັນສະຖານທີ່ໃຫ້ນັກທ່ອງທ່ຽວ ໄດ້ມາທ່ຽວຊົມ. - ປະຊາຊົນທ້ອງຖິ່ນມີອາຊີບເສີມ ,ມີລາຍ ໄດ້ເພີ້ມ ,ເຮັດໃຫ້ການປະ ສານງານລະຫ່ ວ່າງແຂວງ,ເມືອງແລະປະຊາຊົນມີຄວາມຕໍ່ ເນື່ອງສະດວກໃນການປະສານງານ ແລະ ແກ້ໄຂບັນຫາຕ່າງໆ - ສ້າງລາຍໄດ້ໃຫ້ທ້ອງຖິ່ນປະ ກອບສ່ວນ ລົບລ້າງຄວາມທຸກຍາກຕາມນະໂຍບາຍ

		ຂອງລັດຖະບານ
ອຳນາດການປົກຄອງ ແຂວງ ອຸດົມໄຊ	ອາກອນລາຍໄດ້ຈາກການບໍລິການ ການທ່ອງທ່ຽວ	-ຊ່ວຍໃຫ້ເສດຖະກິດຂອງແຂວງ ມີການຂະຍາຍຕົວແລະມີກິດ ຈະກຳທີ່ຫຼາກຫຼາຍ. -ໄດ້ໂຄສະນາແຂວງອຸດົມໄຊ ໃຫ້ນັກທ່ອງ ທ່ຽວຮັບຮູ້ເພີ້ມຂຶ້ນ.
ພະແນກກະສິກຳແຂວງ	ຮັບປະກັນວ່າກິດຈະກຳການທ່ອງທ່ຽວມີ ຄວາມສອດຄ່ອງກັບນະໂຍບາຍແລະ ຫຼັກການຄຸ້ມຄອງກະສິກຳແລະປ່າໄມ້ແລະ ການນຳໃຊ້ນ້ຳທີ່ມີປະສິດທິຜົນ	- ການປົກປັກຮັກສາປ່າໄມ້ແລະຊີວະນາໆ ພັນໄດ້ຮັບການຄຸ້ມຄອງປົກປັກຮັກສາ - ການຮັກສາແຫຼ່ງນ້ຳແລະນຳໃຊ້ນ້ຳທີ່ມີ ປະສິດທິຜົນ
ຜູ້ສຳປະທານ(ຖ້າມີ)	- ພັດທະນາ ແລະ ສິ່ງເສີມການທ່ອງ ທ່ຽວ ໂດຍການພັດທະນາບັນດາ ສິ່ງອຳນວຍ ຄວາມສະດວກ ແລະ ການບໍ ລິການດ້ານ ຕ່າງໆໃນຂອບເຂດສຳປະ ທານ ໃຫ້ກົມກືນ ກັບທຳມະຊາດ ແລະ ໃຫ້ປະຊາຊົນມີສ່ວນ ຮ່ວມ(ແຕ່ໃນກໍລະນີທີ່ປະຊາຊົນສາມາດ ບໍລິຫານຄຸ້ມຄອງເອງໄດ້ກໍ່ຄວນໃຫ້ ປະຊາຊົນເປັນຜູ້ດຳ ເນີນການບໍລິການ) -ໂຄສະນາດຶງດູດນັກທ່ອງທ່ຽວ.	- ສ້າງລາຍຮັບໃຫ້ທຸລະກິດແລະປະຊາຊົນ ທ້ອງຖິ່ນທັງເປັນການສ້າງວຽກເຮັດ ງານທຳໃຫ້ປະຊາຊົນໃນຂອບເຂດພື້ນທີ່ ໃກ້ຄຽງ.
ປະຊາຊົນບ້ານຈອມອອງ ແລະ ບ້ານໃກ້ຄຽງ	- ການບໍລິການເຮືອນພັກແຮມລອມ. -ການບໍລິການແຫລ່ງທ່ອງທ່ຽວຖ້ຳຈອມ ອອງ. - ພັດທະນາ ແລະ ສິ່ງເສີມຜະລິດ ຕະພັນ ທີ່ເປັນມູນເຊື້ອຂອງບ້ານຈອມອອງເຊັ່ນ: ການຜະລິດເຄື່ອງຫັດຖະກຳຕ່ຳແຜ່ນແພ,	- ສ້າງລາຍຮັບສ້າງວຽກເຮັດງານ ທຳເຮັດ ໃຫ້ປະຊາຊົນມີສ່ວນຮ່ວມຫຼາຍຂຶ້ນ. - ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາ ຊົນ ດີຂຶ້ນ, ການບໍລິການທາງດ້ານສັງຄົມດີຂຶ້ນ ແລະ ປະຊາຊົນມີຄວາມພາກພູມໃຈຕໍ່ ຊັບພະຍາກອນ ທີ່ມີຫຼາຍຂຶ້ນ.

	ສິ້ນ ແລະ ເສື້ອຊິ້ນເຜົ່າ, ແລະ ຖັກຖົ່ງປຽດ ເພື່ອຈຳໜ່າຍໃຫ້ນັກທ່ອງທ່ຽວ.	- ສາມາດສ້າງກອງທຶນພັດທະນາ ການທ່ອງທ່ຽວຂອງບ້ານໄດ້.
ນັກທ່ອງທ່ຽວ	-ມານຳໃຊ້ຜະລິດຕະພັນແລະການບໍລິການ ການທ່ອງທ່ຽວແລະມີຄວາມຮັບຜິດຊອບ ຕໍ່ສິ່ງແວດລ້ອມ, ມີຄວາມ ເຄົາລົບນັບຖື ຮີດຄອງປະເພນີແລະລະບຽບກົດໝາຍ	- ໄດ້ນຳໃຊ້ການບໍລິການການ ທ່ອງທ່ຽວ ຕອບສະໜອງຕາມຈຸດປະສົງຂອງນັກ ທ່ອງທ່ຽວ. - ໄດ້ຄວາມຮູ້ ແລະ ປະສົບການ ໃນ ການທ່ອງທ່ຽວ ແລະ ເພີ່ມຄວາມ ຮັບຜິດຊອບໃຫ້ນັກທ່ອງທ່ຽວຕໍ່ສິ່ງແວດ ລ້ອມ, ຮູ້ຈັກເຄົານົບທຳນຽມ ແລະ ຮີດຄອງປະເພນີຂອງທ້ອງຖິ່ນ.

6. ໂຄງສ້າງການຄຸ້ມຄອງແຫຼ່ງທ່ອງທ່ຽວ

ເພື່ອເຮັດໃຫ້ແຫຼ່ງທ່ອງທ່ຽວດັ່ງກ່າວໄດ້ມີການພັດທະນາ ແລະ ຄຸ້ມຄອງຢ່າງເປັນລະບົບມີສ່ວນຮ່ວມລະຫວ່າງພາກ ລັດ-ເອກະຊົນ ແລະ ປະຊາຊົນທ້ອງຖິ່ນ ຕ້ອງມີການສ້າງຕັ້ງຄະນະກຳມະການຊີ້ນຳ ແລະ ຄຸ້ມຄອງແຫຼ່ງທ່ອງທ່ຽວ ຊຶ່ງ ປະກອບມີ 3 ລະດັບດັ່ງນີ້:

6.1 ຄະນະກຳມະການຊີ້ນຳ ແລະ ຄຸ້ມຄອງແຫຼ່ງທ່ອງທ່ຽວ

- ເຈົ້າເມືອງ ຫຼື ຮອງເຈົ້າເມືອງໄຊຜູ້ຊີ້ນຳວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຫົວໜ້າ
- ຫົວໜ້າ/ຮອງຫົວໜ້າພະແນກຖະແຫຼງຂ່າວ,ວັດທະນະທຳແລະທ່ອງທ່ຽວແຂວງອຸດົມໄຊ ຜູ້ຮັບຜິດຊອບວຽກງານທ່ອງທ່ຽວ ເປັນຮອງ
- ຫົວໜ້າ/ຮອງຫ້ອງການແຜນການ ແລະ ການລົງທຶນແຂວງ ເປັນຄະນະ
- ຫົວໜ້າຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງໄຊ ເປັນຄະນະ
- ຫົວໜ້າ/ຮອງຫ້ອງການຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມເມືອງໄຊ ເປັນຄະນະ
- ຫົວໜ້າ/ຮອງຫ້ອງການໂຍທາທິການແລະຂົນສົ່ງເມືອງໄຊ ເປັນຄະນະ
- ຫົວໜ້າ/ຮອງຫ້ອງການກະສິກຳເມືອງໄຊ ເປັນຄະນະ
- ຫົວໜ້າ/ຮອງຫ້ອງການແຜນການແລະການລົງທຶນເມືອງໄຊ ເປັນຄະນະ
- ຫົວໜ້າ/ຮອງຫ້ອງວ່າການປົກຄອງເມືອງໄຊ ເປັນຄະນະ
- ນາຍບ້ານ(ຄະນະບ້ານ) ເປັນຄະນະ

ຄະນະດັ່ງກ່າວມີໜ້າທີ່ຊີ້ນຳລວມໃນການພັດທະນາ ແລະ ຄຸ້ມຄອງແຫຼ່ງທ່ອງທ່ຽວ

ເພື່ອເຮັດໃຫ້ແຫຼ່ງທ່ອງທ່ຽວໄດ້ຮັບການຄຸ້ມຄອງຢ່າງຮັດກຸມ ຄະນະກຳມະການດັ່ງກ່າວຕ້ອງ ໄດ້ແຕ່ງຕັ້ງ ໜ່ວຍງານຄຸ້ມຄອງຖ້ຳຈອມອອງ ເພື່ອຊ່ວຍຜູ້ຄຸ້ມຄອງບໍລິຫານແຫຼ່ງທ່ອງທ່ຽວດັ່ງກ່າວ.

6.2 ໜ່ວຍງານຄຸ້ມຄອງແຫຼ່ງທ່ອງທ່ຽວ

ໜ່ວຍງານຄຸ້ມຄອງແຫຼ່ງທ່ອງທ່ຽວຖ້ຳຈອມອອງແມ່ນຜູ້ຈັດຕັ້ງປະຕິບັດຕົວຈິງໃນການບໍລິຫານ ແລະ ໂດຍກົງ ຊຶ່ງປະກອບດ້ວຍ:

- ຮອງຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງອຸດົມໄຊ ຜູ້ຮັບຜິດຊອບວຽກງານທ່ອງທຽວ ເປັນຫົວໜ້າ
- ພະນັກງານວິຊາການພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ຫົວໜ້າຂະແໜງ ພັດທະນາການທ່ອງທ່ຽວ) ເປັນຫົວຮອງ
- ວິຊາການຫ້ອງການຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວເມືອງໄຊ ເປັນຄະນະ
- ວິຊາການຫ້ອງການຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມເມືອງໄຊ ເປັນຄະນະ
- ວິຊາການພະແນກໂຍທາທິການແລະຂົນສົ່ງເມືອງໄຊ ເປັນຄະນະ
- ວິຊາການຫ້ອງການຊົນລະປະທານເມືອງໄຊ ເປັນຄະນະ
- ວິຊາການຫ້ອງວ່າການເມືອງ ເປັນຄະນະ
- ນາຍບ້ານ(ຄະນະບ້ານ)ທີ່ຕິດພັນໂດຍກົງກັບຖ້ຳຈອມອອງ ເປັນຄະນະ
- **ຂໍ້ແນະນຳ**: ນຳສະເໜີແຂວງອອກຂໍ້ຕົກລົງແຕ່ງຕັ້ງຄະນະຄຸ້ມຄອງແຫຼ່ງທ່ອງທ່ຽວ, ກຳນົດພາລະບົດ ບາດລະອຽດ ຂອງຄະນະກຳມະການ ແລະ ໜ່ວຍງານຄຸ້ມຄອງດັ່ງກ່າວໃຫ້ລະອຽດ.
- ສົມທົບກັບພາກທຸລະກິດໃນການວາງແຜນການໂຄສະນາແຫຼ່ງທ່ອງທຽວຖ້ຳຈອມອອງ, ຈັດກິດຈະກຳຕ່າງໆເພື່ອ ຊຸກຍູ້ໃຫ້ພາກທຸລະກິດຊ່ວຍໂຄສະນາດຶງດູດນັກທ່ອງທ່ຽວ.

6.3 ການສ້າງຕັ້ງກຸ່ມບໍລິການ

ສ້າງຕັ້ງກຸ່ມບໍລິການເຊັ່ນ: ກຸ່ມບໍລິຫານອາຫານ-ເຄື່ອງດື່ມ, ກຸ່ມພະນັກງານນຳທ່ຽວຂັ້ນບ້ານ, ກຸ່ມບໍລິການເຮືອນ ພັກແຂມລອມ, ກຸ່ມບໍລິການປຸງແຕ່ງ, ກຸ່ມຕ້ອນຮັບ, ກຸ່ມຜະລິດເຄື່ອງຫັດຖະກຳຕ່ຳແຜ່ນແພ ແລະ ຖັກ ຖົງປຽດ, ກຸ່ມ ຫັດຖະກຳຈັກສານ, ກຸ່ມຂາຍເຄື່ອງທີ່ລະນຶກ ແລະ ອື່ນໆ ເພື່ອເປັນການສ້າງລາຍຮັບເພີ່ມໃຫ້ແກ່ປະຊາຊົນ ແລະ ບ້ານ. ແຕ່ ຕ້ອງມີການນຳພາ, ມີການຈັດຕັ້ງ ແລະ ບໍລິຫານໃຫ້ເປັນລະບົບໂດຍມີທີມງານຂະແໜງ ທ່ອງທ່ຽວແຂວງອຸດົມໄຊ (ເມືອງ ແລະແຂວງ) ເພື່ອຊ່ວຍດ້ານວິຊາການ ແລະ ປົກປ້ອງດ້ານຜົນປະໂຫຍດ ໃຫ້ປະຊາຊົນໃນທ້ອງຖິ່ນ.

7. ກົນໄກການສ້າງກອງທຶນພັດທະນາແຫລ່ງທ່ອງທ່ຽວຖ້ຳຈອມອອງ

ລາຍໄດ້ຈາກການບໍລິການແຫລ່ງທ່ອງທ່ຽວຖ້ຳຈອມອອງ ຊຶ່ງຜ່ານມາ ແມ່ນຍັງບໍ່ທັນໄດ້ມີການບໍລິການ ແລະ ເກັບ ຄ່າປີ້ເຂົ້າຊົມ, ລາຍຮັບສ່ວນຫລາຍແມ່ນໄດ້ມາຈາກການບໍລິການເຮືອນພັກແຂມລອມ ຊຶ່ງລາຄາບໍລິການແມ່ນ 15,000 ກີບ/ຄົນ/ຄືນ, ການບໍລິການອາຫານແມ່ນ 15,000/ຄົນ/ຄາບ ແລະ ຄ່າບໍລິການພະນັກງານນຳທ່ຽວຂັ້ນບ້ານ ແມ່ນ 40,000/ຄົນ/ຄັ້ງ. ລາຍໄດ້ດັ່ງກ່າວແມ່ນປະຊາຊົນເປັນຜູ້ຈັດຕັ້ງປະຕິບັດ ແຕ່ງົບປະມານດັ່ງກ່າວແມ່ນບໍ່ທັນໄດ້ສ້າງເປັນ ກອງທຶນພັດທະນາແຫລ່ງທ່ອງທ່ຽວເທື່ອ. ສຳລັບນັກທ່ອງທ່ຽວທີ່ມາຊື້ລາຍການທ່ອງທ່ຽວນຳພະແນກຖວທແຂວງ ແມ່ນ ພະແນກໄດ້ຫັກໃຫ້ບ້ານ10,000 ກີບ/ຄົນ/ຄັ້ງ ເພື່ອເຂົ້າເປັນກອງທຶນບໍລິຫານ ແລະ ບຳລຸງ ຮັກສາເຮືອນພັກແຂມລອມ.

ນອກຈາກລາຍໄດ້ທີ່ກ່າວມາຂ້າງເທິງນັ້ນ ເຖິງແມ່ນວ່າແຫຼ່ງທ່ອງທ່ຽວຖ້ຳຈອມອອງ ຍັງບໍ່ທັນມີການບໍລິການທ່ອງທ່ຽວ. ໃນອານະຄົດຄວນຊອກຫາວິທີການຕ່າງໆເພື່ອຫາລາຍໄດ້ມາປັບປຸງສິ່ງອຳນວຍພາຍໃນບໍລິເວນແຫລ່ງທ່ອງທ່ຽວຖ້ຳຈອມອອງ ໃຫ້ມີຄວາມຍືນຍົງ ແລະ ຄວນມີການສ້າງກອງທຶນເພື່ອພັດທະນາຄຸ້ມຄອງແຫຼ່ງທ່ອງທ່ຽວ ແລະ ນຳໃຊ້ເຂົ້າໃນການບູລະນະຮັກສາແຫຼ່ງທ່ອງທ່ຽວດັ່ງກ່າວ. ສຳລັບລາຍລະອຽດກ່ຽວກັບວິທີການສ້າງກອງທຶນພັດທະນາແຫຼ່ງທ່ອງທ່ຽວ ຖ້ຳ ຈອມອອງ ແມ່ນໃຫ້ຄະນະຄຸ້ມຄອງແຫຼ່ງທ່ອງທ່ຽວ ຈັດກອງປະຊຸມປຶກສາຫາລືສະເພາະບັນຫາດັ່ງກ່າວ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດລາຍງານນີ້ໄວ້ເປັນບ່ອນອີງໃນການກຳນົດເຂດຈັດສັນແຫຼ່ງທ່ອງທ່ຽວ ເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງນຳສະເໜີອຳນາດການປົກຄອງ ເພື່ອຮັບຮອງ ແລະ ຜັນຂະຫຍາຍການຈັດຕັ້ງ ປະຕິບັດ.

ກົມພັດທະນາການທ່ອງທ່ຽວ
ຄະນະຮັບຜິດຊອບການສຳຫຼວດ-ຈັດສັນແຫຼ່ງທ່ອງທ່ຽວ

ທ່ານເຈົ້າແຂວງຊີ້ນຳ

- ໃຫ້ເນັ້ນສິ່ງແວດລ້ອມ ນຳໃຊ້ວັດສະດຸທ້ອງຖິ່ນ ຫຼີກເວັ້ນການນຳໃຊ້ສີມັງ ເຫຼັກເສັ້ນ ແລະ ອື່ນໆ...
- ທ່ຽວທຳມະຊາດ, ທ່ຽວຊົນເຜົ່າ, ມີວັດທະນະທຳ, ວັດນະຄະດີຂອງຊົນເຜົ່າ ເຮັດໃຫ້ບ້ານມີສ່ວນຮ່ວມ ໃຫ້ບ້ານເຂົ້າມາມີສ່ວນຮ່ວມຫຼາຍຂຶ້ນ
- ຮ່ວມກິດຈະກຳກັບຊາວບ້ານ ຕິດພັນກັບການຜະລິດການປູກເຂົ້າ, ປູກສາລີ ແລະ ອື່ນໆ
- ກ່ອນໜ້າທີ່ໄດ້ເປີດງານມະຫາກຳການທ່ອງທ່ຽວແຂວງພາກເໜືອ,ມີນັກທ່ອງທ່ຽວມາຫຼາຍ ແຕ່ປະຈຸບັນແຂວງອຸດົມໄຊເປັນທາງເວັ້ນຂອງນັກທ່ອງທ່ຽວ(ແຂວງອຸດົມໄຊ ບໍ່ມີແຫຼ່ງທ່ອງທ່ຽວ)
- ຈະເອົາໄຟຟ້າເຂົ້າຮອດຖ້ຳ ໄດ້ເຊັນສັນຍາປັບປຸງທາງຈາກບ້ານນາບໍ່ຕາໄກ່ ຮອດບ້ານຈອມອອງ ງົບປະມານ30 ຕື້ ງົບປະມານລັດຖະບານລາວ ໄລຍະ20 ກວ່າ ກມ.
- ປີ 2014 ໃຫ້ໄດ້ເຂົ້າໄປທ່ຽວໃນຖ້ຳຈອມອອງໄດ້
- ສຳລັບເຂດໃຫ້ສົມທົບກັບພາກສ່ວນທີ່ດິນ ເພື່ອອອກໜັງສືໃບຕາໜີເພື່ອຄຸ້ມຄອງເຂດດັ່ງກ່າວ(ໃຫ້ອອກຂໍ້ຕົກລົງຂອງທ່ານເຈົ້າແຂວງ).